# ກຸ່ມຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 7-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Samakeetam Baptist Fellowship, Dallas, Texa s

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ເປັນຫຍັງຜູ້ຄົນທັງຫລາຍຈຶ່ງບໍ່ຖືກຕ້ອງປອງດອງກັນ?

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 1:1-17

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> 1 ໂກຣິໂທ 1: 1-17

<u>ຈຸດສຳຄັນຂອງບົດຮຽນນີ້:</u> ການແຕກແຍກຂອງຄຣິສຕຽນ ແມ່ນການບໍ່ເຫັນພ້ອມໃນການຮັບພຣະພອນໃນຄຣິສຕະຈັກແລະກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າ ທີ່ຢາກໃຫ້ຊີວິດຄຣິສຕຽນເປັນດັ່ງນັ້ນ.

<u>ຄຳຖາມເພື່ອສຳຣວດ:</u> ເຮົາຈະຮັບພຣະຄຸນຈາກພຣະເຈົ້າຢ່າງໃດ ໃນເມື່ອເຮົາຫາກມີການແບ່ງແຍກແລະເປັນສັດຕຣູກັນຢູ່ຢ່າງນີ້?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະສະແດງໃຫ້ເຫັນວ່າ ການແຕກແຍກໃນໝູ່ຄຣິສຕຽນ ແມ່ນການຂັດຂວາງພຣະພອນໃນຄຣິສຕະຈັກ ແລະ ກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າ.

## <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ກ່ອນເຂົ້າຫ້ອງຮຽນ ໃຫ້ຄຣູສອນໄປຕຽມຂຽນໃສ່ກະດານໄວ້ກ່ອນ; ໜັງສືພິມ; ຫລືຂ່າວຕ່າງໆທີ່ມີການແຕກແຍກກັນ, ການຢ່າຮ້າງ; ການຂື້ນສານ; ບອກໃຫ້ນັກຮຽນຮູ້ວ່າມັນເປັນສ່ວນປະກອບຂອງໂລກ. ຄຣູຈະນຳມາອະທິບາຍແຕ່ລະຢ່າງໄປ. ຍັງບໍ່ພໍທໍ່ນັ້ນຍັງມີຢູ່ໃນຄຣິສຕະຈັກຂອງພຣະເຈົ້າອີກດ້ວຍ, ຢ່າງໃດກໍຕາມພວກເຮົາຍັງບໍ່ທັນໝົດຫວັງເທື່ອ!!!!!!!!!!

2. ເຊີນຄົນນຶ່ງອ່ານ ຈາກເຈັ້ຽບົດຮຽນ ຢູ່ບ່ອນ ຈຸດສຳຄັນຂອງບົດຮຽນນີ້ : " ການແຕກແຍກຂອງຄຣິສຕຽນ ແມ່ນການບໍ່ເຫັນພ້ອມໃນການຮັບພຣະພອນໃນຄຣິສຕະຈັກ ແລະ ກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າ ທີ່ຢາກໃຫ້ຊີວິດຄຣິສຕຽນເປັນດັ່ງນັ້ນ "
   ໜູນໃຈໃຫ້ນັກຮຽນແຕ່ລະຄົນໄດ້ກ້າເວົ້າ ອອກຄວາມຄິດຄວາມເຫັນ

3. ການບໍ່ຖືກຕ້ອງປອງດອງກັນຂອງຄຣິສຕະຈັກເມືອງໂກຣິນໂທ ເປັນສິ່ງຈຳເປັນທີ່ສຸດທີ່ໂປໂລຕ້ອງຂຽນຈົດໝາຍໄປເຕືອນຊຶ່ງເປັນຈົດໝາຍສະບັບທຳອິດທີ່ຂຽນໄປເຕືອນຄຣິສຕະຈັກແຫ່ງນີ້.
   - ແມ່ນຫຍັງຄືຫລັກຖານອ້າງອີງວ່າມີການແຕກແຍກກັນໃນໝູ່ຄຣິສຕຽນທຸກວັນນີ້?
   - ມີຄວາມສຳຄັນຢ່າງໃດທີ່ ພວກເຮົາຕັກເຕືອນເຖິງການແຕກແຍກ ໃນທາງຂອງພຣະເຈົ້າ?

### <u>ນຳພາສຶກສາພຣະທັມ</u>

4. ໃຫ້ຂຽນ ໃສ່ກະດານ: 1. ພຣະເຈົ້າແມ່ນໃຜ?

2. ຄຣິສຕະຈັກເມືອງໂກຣິນໂທແມ່ນໃຜ?

3. ທ່າທີຂອງໂປໂລ ຕໍ່ຄຣິສຕະຈັກ ເມືອງໂກຣິນໂທ.

5. ແບ່ງນັກຮຽນອອກເປັນສາມໝວດ ໜູນໃຈໃຫ້ແຕ່ລະໝວດຕັ້ງໃຈຟັງ ໃຫ້ຄົນນຶ່ງອ່ານ 1ໂກຣິນໂທ 1:1-9

6. ຫລັງຈາກອ່ານຈົບແລ້ວ ເຊີນ ໝວດທີ່ໄດ້ຄຳວ່າ ພຣະເຈົ້າແມ່ນໃຜ? ບັນທຶກ. ໃຫ້ອະທິບາຍຄຳວ່າ "ພຣະເຢຊູ, ພຣະຄຣິດ, ພຣະເຈົ້າ, ພຣະບິດາ "

7. ເຊີນໝວດທີ່ໄດ້ຄຳວ່າ ຄຣິສຕະຈັກເມືອງໂກຣິນໂທແມ່ນໃຜ? ໝວດນີ້ໃຫ້ອະທິບາຍຄຳວ່າ: ເປັນຫຍັງໂປໂລ ຈຶ່ງເອີ້ນຄຣິສຕະຈັກນີ້ວ່າຄຣິສຕະຈັກຂອງພຣະເຈົ້າ, ຜູ້ໄດ້ຮັບການຊົງຊຳຣະໃຫ້ບໍຣິສຸດ ໃນພຣະເຢຊູຄຣິດ. (1:2) ເພາະທ່ານທັງຫລາຍພໍ່າພ້ອມດ້ວຍທຸກສິ່ງທຸກຢ່າງໃນພຣະອົງ (1:5) ອະທິບາຍ

8. ບອກໝວດທີ່ໄດ້ຄຳທີ່ວ່າ: "ທ່າທີຂອງໂປໂລຕໍ່ຄຣິສຕະຈັກເມືອງໂກຣິນໂທ" ໃຫ້ ບັນທຶກ. ລາວຮັກ, ລາວເປັນຫ່ວງ, ລາວເຕືອນເພື່ອໃຫ້ເຂົາໄດ້ຮັບພຣະພອນ.

9. ພວກເຮົາໄດ້ບົດຮຽນນີ້ຢ່າງໃດຈາກໂປໂລ ເຣື່ອງຄຣິສຕຽນທີ່ລົງລອຍກັນ ແລະບໍ່ລົງລອຍກັບຜູ້ອື່ນໆດ້ວຍ.
   ພວກເຮົາຕ້ອງພະຍາຍາມຈົນເຖິງທີ່ສຸດ
   ພວກເຮົາຄວນຈຳໄວ້ວ່າພວກເຮົາຍັງມີອາຈານຂອງພວກເຮົາ
   ພວກເຮົາຕ້ອງຈຳໄວ້ວ່າພວກເຮົາໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າອົງດຽວກັນ.
   ພວກເຮົາຕ້ອງສຳແດງຄວາມຮັກແລະຄວາມເປັນຫ່ວງຢ່າງແທ້ຈິງຕໍ່ພວກເຂົາ.

10. ໂປໂລເຂົ້າຫາຄົນ ລາວມີຄວາມສລາດຫລາຍ ເພາະລາວມີຫົວໃຈທີ່ຈະໃຫ້ແກ່ພວກເຂົາ ຜູ້ທີ່ມີບັນຫາ.

11. ໃຫ້ຄົນນຶ່ງອ່ານ 1:10 ໃຫ້ດັງໆ. ເປັນຫຍັງໂປໂລຈຶ່ງເວົ້າຄຳແຮງແທ້ ເຊັ່ນ: ວິງວອນ(ພາສາໄທ) ຂໍຮ້ອງ (ພາສາລາວ) ຄຳເວົ້າຢ່າງນີ້ເປັນການຮີບດ່ວນຫລາຍປານໃດ.

12. ອ່ານ 1:11-17. ຂໍ້ຂັດແຍ້ງຕ່າງໆໃນເມືອງໂກຣິນໂທ ມາຈາກໃສ?

<u>ໜູນໃຈໃນພາກປະຕິບັດ:</u>

13. ຄຣິສຕຽນທຸກວັນນີ້ ຄວນແກ້ໄຂຢ່າງໃດ? ຂຽນລົງໃນກະດານ

14. ສິ່ງໃດທີ່ເຮົາຄວນຈະແກ້ໄຂຂໍ້ຜິດພາດ ຫລືຄວາມບໍ່ເຂົ້າໃຈກັນໄດ້.

ອ.ຈ. ບຸນໂຮມ ພົມມະຈັນ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຈົ່ງຄິດເຖິງໄມ້ກາງແຂນ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 1:18-2:2

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> 1 ໂກຣິໂທ 1:18-2:2

<u>ຈຸດສຳຄັນຂອງບົດຮຽນນີ້:</u> ກາງແຂນຂອງພຣະຄຣິດ ປະທານສິດໃຫ້ເຮົາມີສາຍພົວພັນກັນກັບພຣະເຈົ້າ ແລະ ເພື່ອນຄຣິສຕຽນດ້ວຍກັນ.

<u>ຄຳຖາມເພື່ອສຳຣວດ:</u> ໃນຄວາມສັມພັນຂອງເຮົາກັບພຣະເຈົ້າ ແລະຄຣິສຕຽນດ້ວຍກັນນັ້ນ-- ທ່ານເອົາໄມ້ກາງແຂນຂອງພຣະຄຣິດໄວ້ຢູ່ທີ່ໃດ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະບົ່ງບອກໃຫ້ຮູ້ເຖິງຄວາມຫມາຍ ຂອງໄມ້ກາງແຂນຂອງພຣະຄຣິດ ນັ້ນຄື ຄວາມສັມພັນຂອງຂ້ອຍກັບພຣະເຈົ້າ ແລະ ເພື່ອນຄຣິສຕຽນດ້ວຍກັນ.

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ກ່ອນເຂົ້າຫ້ອງຮຽນ ໃຫ້ຄຣູສອນໄປຂຽນກະດານໄວ້ : ອ່ານຕຳຣາ, ຫມໍເດົາຫມໍດູ, ພາຍຊັບ.....ທັງສາມຢ່າງນີ້ມີອັນຄ້າຍຄືກັນບໍ່. ສິ່ງເຫລົ່ານີ້ ແມ່ນຄົນສມັຍໃຫມ່ເຂົາໃຊ້ກັນເພື່ອແກ້ໄຂບັນຫາ. ຜູ້ໃດຮູ້ຕື່ມອີກແດ່ບໍ່?

2. ກ່າວເຖິງເຈົ້ຣບົດຮຽນ ສຳລັບວັນນີ້ ຫົວຂໍ້ທີ່ນຶ່ງກ່າວວ່າ "ພຣະກິຕິຄຸນ: ຄວາມອ່ອນແອ ແລະຄວາມໂງ່" ແລະ ຫົວຂໍ້ທີສອງ: "ຊາວເມືອງໂກຣິນໂທ: ເຫັນຄວາມເລິກລັບແຫ່ງພຣະຄຸນຂອງພຣະເຈົ້າເປັນຂອງຕ່ຳ" ແລະ ສຸດທ້າຍ "ສະລຸບ: ຄວາມອ່ອນແອຂອງກາງແຂນຮຽກຮ້ອງໃຫ້ເຮົາເທສນາສັ່ງສອນ" ປໂຍກເຫລົ່ານີ້ແມ່ນເປັນການສນັບສນູນ ຄຳເທສນາສັ່ງສອນຂອງໂປໂລ ກ່ຽວກັບພຣະກິຕິຄຸນ, ຄົນສ່ວນຫລາຍໄດ້ຮັບຄວາມລອດພົ້ນດ້ວຍພຣະກິຕິຄຸນ, ແລະຮູບແບບຂອງການປະກາດພຣະກິຕິຄຸນ. ຢ່າລືມວ່າ ການປະກາດພຣະກິຕິຄຸນຈະບໍ່ເປັນໄປຕາມສິ່ງທີ່ເຮົາຄາດຫມາຍໄວ້ຕລອດໄປ.

## <u>ນຳພາສຶກສາພຣະທັມ</u>

3. ແບ່ງກະດານອອກເປັນສອງສ່ວນ, ສ່ວນນຶ່ງໃຫ້ຂຽນຫົວຂໍ້ວ່າ ຄວາມເຫັນຂອງໂລກ ແລະອີກສ່ວນນຶ່ງໃຫ້ຂຽນວ່າ ຄວາມເຫັນຂອງໂປໂລ.
4. ຕໍ່ໄປນີ້ໃຫ້ຂຽນຄຳເວົ້າທີ່ຈະສົນທະນາກັນ "ຄຳວ່າໄມ້ກາງແຂນ" ເມື່ອສົນທະນາກັນແລ້ວ ໃຫ້ນັກຮຽນຄົນນຶ່ງອ່ານພຣະຄັມພີ 1ກທ 1:18-19. ຍົກໃຫ້ເຫັນຄວາມເຫັນຂອງໂລກ ແລະ ຂອງໂປໂລວ່າມີຄວາມແຕກຕ່າງກັນຢ່າງໃດ,

5. ຕໍ່ໄປຂຽນຄຳວ່າ "ໃຜຈະສາມາດຊ່ວຍເຮົາໃຫ້ລອດພົ້ນໄດ້" ໃຫ້ຄົນນຶ່ງອ່ານ 1 ກທ 1:19-25; ໃຫ້ທຸກຄົນເບິ່ງດ້ວຍ

ກັນວ່າ ຄວາມເຫັນຂອງໂລກເປັນຢ່າງໃດ ແລະຄວາມເຫັນຂອງໂປໂລເປັນຢ່າງໃດ?
ເບິ່ງຂໍ້ 22-24 ຄົນຢິວສແວງຫາອັນໃດ ແລະຄົນຕ່າງຊາດສແວງຫາອັນໃດ.

- ຄົນທຸກວັນນີ້ກໍຊອກສແວງຫາເຄື່ອງໝາຍ
- ມີວິທີໃດອີກແດ່ບໍ່ທີ່ຄົນຊອກສແວງຫາເຄື່ອງໝາຍ
- ຍ້ອນຫຍັງຄົນສມັຍໃໝ່ຈຶ່ງ ຖືວ່າ ກາງແຂນເປັນເຣື່ອງໂງ່?

6. ຫວນກັບຄືນໄປຫາສິ່ງທີ່ຂຽນໄວ້ໃນກະດານ "ໃຜຈະສາມາດຊ່ວຍເຮົາໃຫ້ລອດພົ້ນໄດ້? ເຊີນນັກຮຽນໃນຫ້ອງ ອ່ານ 1 ກທ 1:26-31 ອ່ານງຽບໆ. ເບິ່ງຄວາມແຕກຕ່າງ ຣະຫວ່າງຄວາມເຫັນຂອງໂລກ ແລະຄວາມເຫັນ ຂອງໂປໂລ ໂດຍອີງໃສ່ເຈົ້າຽບົດຮຽນ.

7. ຖາມ: ຕັ້ງແຕ່ໂປໂລ ໄດ້ກ່າວເຖິງຄວາມບໍ່ຖືກຕ້ອງປອງດອງກັນໃນໝູ່ຜູ້ທີ່ເຊື່ອ ສ່ວນຫລາຍແລ້ວກໍແມ່ນຜູ້ທີ່ມັກ ອວດອົ່ງທະນົງຕົວ ທ່ານມີຄວາມຄິດເຫັນຢ່າງໃດ ໃນຄຳເວົ້າຢ່າງນີ້? ໃຫ້ໃຊ້ຂໍ້ເທັດຈິງທີ່ເໝາະສົມ ກ່ຽວກັບບັນ ຫານີ້ "ຢູ່ໃນຄວາມໝາຍນີ້"

8. ເຊີນຄົນນຶ່ງອ່ານ 1ກທ 2:1-2 ດັງໆ. ຖາມວ່າພວກເຮົາຄວນຖືເອົາເປັນບົດຮຽນຢ່າງໃດຈາກໂປໂລ?

- ❖ ຄຸນລັກສະນະຂອງຜູ້ນຳຄຣິສຕຽນ
- ❖ ນິສັຍໃຈຄໍຂອງຜູ້ນຳຄຣິສຕຽນ

## ຫມູນໃຈໃນພາກປະຕິບັດ:

9. ເປີດປຶ້ມເພງ ແລ້ວເປີດໄປ ບົດທີ 278 "ໃຈຊື່ວເທົ່າໃດ" ໃນບົດເພງນີ້ ສ່ວນຫລາຍຈະເປັນບົດເພງເຊື້ອເຊີນ ເນື້ອໃນໃຈຄວາມຂອງບົດເພັງນີ້ ມີຄວາມໝາຍຄືແນວໃດ?

10. ອ່ານວັກທີ່ນຶ່ງວັກດຽວ ແລ້ວອະທິຖານປິດ

# ບົດແນະນຳການສິດສອນ
# ບົດຮຽນທີ 3
# ຈົ່ງເປັນຜູ້ໃຫຍ່ທາງຝ່າຍຈິດວິນຍານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ໂກຣິນໂທ 2:14 ຫາ 3:16

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: 1 ໂກຣິນໂທ 2:14 ຫາ 3:16

ຈຸດສຳຄັນຂອງບົດຮຽນນີ້: ຊີວິດຄຣິສຕຽນທີ່ຈະເຣີນເຕີບໂຕຝ່າຍຈິດວິນຍານ ແມ່ນຄຸນລັກສະນະທີ່ໃຫຍ່ໃນການເປີດກວ້າງ ແລະໃນການເຊື່ອຟັງພຣະເຈົ້າ, ການຖ່ອມຕົວ ໃນການບັນລຸຜົນ, ໃນດ້ານຄວາມຮັກ, ປະສົມປະສານສອດຄ້ອງກັບຄົນອື່ນ.

ຄຳຖາມເພື່ອການສຳຫລວດ: ຄຣິສຕຽນທີ່ຈະເລີນເຕີບໂຕຝ່າຍຈິດວິນຍານເປັນຄືແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຊັ່ງຊາ ພິຣາຄາວ່າຄຸນລັກສະນະຂອງຊີວິດຄຣິສຕຽນທີ່ໃຫຍ່ທາງດ້ານຈິດວິນຍານນັ້ນ.

## ແຜນການສອນ

## ສະພາບຊີວິດຈິງ

1. ຊາວໜຸ່ມຄົນນຶ່ງ ໄດ້ກ່າວຄຳພະຍານໃນຕອນເຊົ້າວັນອາທິດ ເວລານະມັສການ, ລາວໄດ້ຍົກຍ້ອງຫົວໜ້າຊາວໜຸ່ມວ່າ ເປັນຜູ້ນຳພາລາວມາພົບກັບພຣະເຢຊູ "ຜູ້ນຳຄົນນີ້ ລາວດີຫລາຍ, ລາວສຳແດງພຣະເຢຊູ ໃຫ້ຂ້ອຍເຫັນ, ລາວເປັນຄົນທຳອິດທີ່ຂ້ອຍເຫັນພຣະເຢຊູໃນຕົວລາວ. ເຖິງປານນັ້ນກໍຕາມແມ່ຕູ້ ມີລລີ ເຄີຍເປັນຄົນໂທຣະສັບປຸກລາວຍາມມື້ເຊົ້າ ແລະຂັບຣົດໄປຮັບເອົາລາວໄປໂບດ. ຍັງບໍ່ພໍເທົ່ານັ້ນ ເວລາມີ ແຄມປ໌ ຂອງຊາວໜຸ່ມແມ່ຕູ້ກໍຍັງຊ່ວຍອອກເງິນໃຫ້. ລາວພູມໃຈທີ່ສຸດທີ່ເຫັນຄົນໜຸ່ມຜູ້ນີ້ ມາເປັນຄຣິສຕຽນ. ແຕ່ລາວກໍຍັງເສັຽໃຈຢູ່ ເພາະວ່າມີຄົນມາຮັບເອົາ ກເຣດິດ ໄປໝົດແລ້ວ.
   ຄຳຖາມ: ແມ່ຕູ້ຄົນນີ້ ຄວນຈະມີຄວາມເວົ້າສຽດສີໃສ່ຫົວໜ້າຊາວໜຸ່ມຫລືບໍ່? ແມ່ຕູ້ຄົນນີ້ທຳໜ້າທີ່ຢ່າງໃດຕໍ່ຊາວໜຸ່ມຜູ້ນີ້?

2. ເຖິງຈະເປັນຄຣິສຕຽນ ແຕ່ແມ່ຕູ້ຄົນນີ້ ກໍຈະພະຍາຍາມທີ່ສຸດທີ່ຈະເອົາ " ອຸປນິດສັຍ ມະນຸດທັມະດາ "ທີ່ໂປໂລກ່າວມານັ້ນອອກ. (2:14) ບົດຮຽນໃນວັນນີ້ ພວກເຮົາຈະມາຮຽນ ເຖິງອຸປນິສັຍ ແລະທ່າທີຂອງຄວາມເປັນຜູ້ໃຫຍ່ຝ່າຍຈິດວິນຍານ.

## ນຳພາສຶກສາພຣະຄັມພີ

3. ເຕືອນນັກຮຽນ ບັນຫາທີ່ໂປໂລກ່າວໄປນັ້ນ ແມ່ນບັນຫາຂອງຊາວເມືອງໂກຣິນໂທ : ຜູ້ຕິດຕາມທັງຫລາຍຈື່ນວ່າ ມີການແບ່ງແຍກໃນບັນດາຜູ້ນຳທັງຫລາຍ. ຄວາມໂອ້ອວດ ຄວາມຈອງຫອງ ແລະການຢ້ານລື່ນຢ້ານເຫລືອກັນ ເຮັດໃຫ້ມີການແບ່ງແຍກ ເຮັດໃຫ້ບໍ່ມີຄວາມປອງດອງກັນໃນຄຣິສຕະຈັກ, ຈຶ່ງເຫັນໄດ້ວ່າຄຣິສຕະຈັກຍັງບໍ່ທັນເຕີບໃຫຍ່ຝ່າຍວິນຍານເທື່ອ.

4. ເທິງກະດານໃຫ້ຂຽນ ສອງຄຳນີ້. " ມະນຸດທັມມະດາ" ແລະ "ຝ່າຍຈິດວິນຍານ"

5. ອ່ານໃນ 1 ໂກຣິນໂທ 2:14-3:4 ດັງໆ. ຈະອ່ານສອງຫລືສາມຄົນກໍໄດ້. ໃຫ້ເບິ່ງໃນເຈັ້ຽບົດຮຽນ ອະທິບາຍຄຳວ່າ ມະນຸດທັມມະດາ. ສ່ວນຫລາຍມະນຸດພວກນີ້ຈະດຳເນີນຕາມແບບຊີວິດເກົ່າ, ເຂົາຈະເຮັດເຫມືອນກັບບໍ່ໄດ້ຮັບພຣະເຢຊູເລີຍ. ເຖິງແມ່ນເຂົາຈະໄດ້ຮັບແລ້ວກໍຕາມ ແຕ່ການປະພຶດຂອງເຂົາຍັງບໍ່ທັນປ່ຽນແປງເລີຍ.

6. ນຳພານັກຮຽນໃຫ້ມາເບິ່ງ 3:3 ອີງຕາມຄວາມເວົ້າຂອງໂປໂລ ແມ່ນອຸປນິສັຍທີ່ນຳພາໃຫ້ຊາວໂກຣິນໂທສະແດງທ່າທີອອກມາ ແບບມະນຸດທັມມະດາ ຫລາຍກວ່າຝ່າຍວິນຍານ. 3:1-2 ໂປໂລເອີ້ນພວກເຂົາ ວ່າ ເປັນເດັກນ້ອຍອ່ອນຢູ່.

7. ຫນູນໃຈໃຫ້ນັກຮຽນອ່ານ 3:5-9. ຖາມ: ພວກເຮົາເຫັນພາບພົດຂອງໂປໂລ ໃນການທີ່ລາວຢາກປັບປຸງຄຣິສຕະຈັກບໍ່?

- ຜູ້ນຳຄວນເປັນຜູ້ຮັບໃຊ້ (3:5)
- ພຣະເຈົ້າ, ບໍ່ແມ່ນມະນຸດ, ເປັນຜູ້ໃຫ້ໂອກາດ ແລະ ເປັນຜູ້ໃຫ້ເຮົາເຕີບໃຫຍ່. (3:5-7)
- ແຕ່ລະຄົນ, ມີຄວາມແຕກຕ່າງກັນ, ມີຫນ້າທີ່ (3:6)
- ພວກເຮົາທຳງານເພື່ອພຣະເຈົ້າ (3:9)
- ຄົນຂອງພຣະເຈົ້າແມ່ນໄຮ່ນາຂອງພຣະເຈົ້າ ແລະ ເປັນຕຶກຂອງພຣະເຈົ້າ

8. ຕໍ່ຫນ້າຫ້ອງຮຽນ , ໃຫ້ຂຽນ ໃສ່ເຈັ້ຽແຜ່ນໃຫຍ່ (ຈະແຕ້ມເປັນຮູບໂບດຍິ່ງດີ)
   (ກ) ແມ່ນໃຜເປັນຮາກຖານ?
   (ຂ) ຈະໃຊ້ອຸປກອນຢ່າງໃດທີ່ຈະທົນທານຕໍ່ໄຟໄດ້?
   (ຄ) ຕຶກ, ຄຣິສຕະຈັກ, ພຣະເຈົ້າ, ມີຄວາມສຳຄັນຢ່າງໃດ?
   ໃຫ້ຄົນນຶ່ງອ່ານ 3:10-16 ຕອບຄຳຖາມຂ້າງເທິງນີ້.

9. ແລ້ວໃຫ້ຄົນນຶ່ງອ່ານ 3:17 ເພື່ອຈະເນັ້ນຫນັກເຖິງຄວາມສຳຄັນຂອງຄຣິສຕະຈັກຂອງພຣະເຈົ້າ. ພຣະເຈົ້າຈະເຮັດຢ່າງໃດຕໍ່ຜູ້ທີ່ທຳລາຍພຣະວິຫານນັ້ນ?

<u>ຫນູນໃຈນຳມາໃຊ້ໃນຊີວິດຈິງ:</u>

10. ແມ່ຕູ້ ຄົນທີ່ເຮົາກ່າວກັນ ລາວມີອຸປນິສັຍຢ່າງໃດ? ລາວຄວນຈະກຳຈັດມັນອອກໄປບໍ່? ອຸປນິສັຍທີ່ບໍ່ດີຍັງມີຫລາຍຢ່າງ ໃນຕົວເຮົາ ເຮົາຄວນກຳຈັດມັນອອກໄປບໍ່?

11. ໃຫ້ນັກຮຽນສຳຣວດຕົວເອງວ່າອຸປນິສັຍ ທີ່ເຫັນວ່າຕົວເອງເຕີບໃຫຍ່ມີບໍ່? ຍັງມີອຸປນິສັຍໃດແດ່ທີ່ເຮົາຍັງຕ້ອງການໃຫ້ພຣະເຈົ້າຊ່ວຍ.

12. ອະທິຖານປິດໃຫ້ພຣະເຈົ້ານຳພາ. ຈົ່ງພ້ອມໃຈກັນເຂົ້ານະມັສການພຣະເຈົ້າ. ອ.ຈ. ບຸນໂຮມ ພົມມະຈັນ

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ພາກປະຕິບັດຂອງຜູ້ນຳໃນຖານະເປັນຜູ້ຮັບໃຊ້

---

<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u> 1 ໂກຣິນໂທ 4:1-14

<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u> 1 ໂກຣິນໂທ 4:1-21

<u>ຈຸດສຳຄັນຂອງບົດຮຽນນີ້:</u> ວຽກງານຂອງຄຣິສຕະຈັກຈະເດີນໄດ້ສະດວກ ເມື່ອຜູ້ນຳແລະສະມາຊິກໃນຄຣິສຕະຈັກປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຖ່ອມຕົວແລະນັບຖືຊຶ່ງກັນແລະກັນ.

<u>ຄຳຖາມເພື່ອການສຳຫລວດ:</u> ຜູ້ນຳແລະສະມາຊິກໃນຄຣິສຕະຈັກມີຄວາມສຳພັນກັນຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ຜູ້ນຳແລະສະມາຊິກໃນຄຣິສຕະຈັກມີຄວາມສຳພັນກັນ ຕາມຫລັກຄຳສອນຂອງພຣະຄັມພີ.

<u>ແຜນການສິດສອນ</u>

<u>ຊີວິດສະພາບຕົວຈິງ</u>

1. ໃຫ້ຂຽນຄຳເວົ້າຕໍ່ໄປນີ້ໃສ່ເທິງກະດານ: <u>ພວກເຈົ້າບໍ່ຕ້ອງໄປຫ່ວງວ່າຄົນທາງນອກຈະເວົ້າຫຍັງ</u>. ຢູ່ຂ້າງລຸ່ມຄຳເວົ້ານີ້ໃຫ້ຂີດເສັ້ນຕັ້ງຢູ່ທາງກາງແລະຂຽນໃສ່ຂ້າງນຶ່ງວ່າ: <u>ເຫັນພ້ອມ</u> ແລະອີກຂ້າງນຶ່ງວ່າ <u>ບໍ່ເຫັນພ້ອມ</u>. ຫລັງຈາກນັ້ນໃຫ້ສະມາຊິກໃນຫ້ອງອອກຄວາມເຫັນຂອງພວກເຂົາ.

2. ໃຫ້ອ່ານຄຳຖາມຂໍ້ທີ 4 ຈາກບົດຮຽນຂອງສະມາຊິກໃນຫ້ອງດັງໆ. ບອກສະມາຊິກໃນຫ້ອງວ່າ ພວກເຮົາຈະສຶກສາຂໍ້ພຣະຄັມພີໃນເຣື່ອງກ່ຽວກັບຄວາມຄິດເຫັນຂອງມະນຸດແລະໜ້າທີ່ຂອງຜູ້ທີ່ຈະເປັນຜູ້ຕັດສິນຄົນອື່ນ.

<u>ສຶກສາບົດຮຽນ</u>

3. ໃຫ້ສະມາຊິກໃນຫ້ອງອ່ານບົດທີ 4:1-5 ຢ່າງງຽບໆ. ແລ້ວຕັ້ງຄຳຖາມດັ່ງຕໍ່ໄປນີ້:

- ໂປໂລມີຫລັກຖານອັນໃດຈຶ່ງຄິດວ່າລາວແລະຜູ້ນຳຄົນອື່ນຕ້ອງຖືກຕັດສິນ? (4:1-2)
- ແມ່ນໃຜເປັນຜູ້ຕັດສິນທີ່ສຳຄັນທີ່ສຸດ: ຕົວເຮົາເອງ, ຄົນອື່ນ, ຫລືພຣະຜູ້ເປັນເຈົ້າ? (4:3-5)
- ໂປໂລໄດ້ບັນລະຍາຍກ່ຽວກັບການພິພາກສາຂອງພຣະຜູ້ເປັນເຈົ້າຢ່າງລະອຽດມີອັນໃດແດ່? (4:5)
- ແມ່ນໜ້າທີ່ຂອງຜູ້ໃດກັນແທ້ຈະເປັນຜູ້ຕັດສິນຜູ້ນຳຄຣິສຕຽນ?

ໃຫ້ແບ່ງປັນຂໍ້ຄວາມໃນພຣະຄັມພີຂ້າງເທິງໃນຄູ່ມືບົດຮຽນຂອງສະມາຊິກໃນຫ້ອງ.

4. ໃຫ້ຂຽນຄຳວ່າ <u>ການຕັດສິນລ່ວງໜ້າໂດຍບໍ່ຮູ້ເຫດການ</u> ໃສ່ເທິງກະດານ. ໃຫ້ກ່າວວ່າ ວັນນີ້ໃນພວກເຮົາບາງຄົນອາດຈະມີຄວາມຜິດທີ່ເປັນຜູ້ຕັດສິນຄົນອື່ນລ່ວງໜ້າໂດຍບໍ່ຮູ້ເຫດການ. ອ້າງອີງຕາມຂໍ້ພຣະທັມ ບົດທີ 4:5 ຖ້າພວກເຮົາຫາກ " ຕັດສິນສິ່ງໃດກ່ອນເວລາ " ແລະບໍ່ລໍຖ້າຈົນກວ່າ " ພຣະຜູ້ເປັນເຈົ້າຈະສະເດັດມາ " ພວກເຮົາຈະເປັນຜູ້ກ່າວຫາຄົນອື່ນ. ບອກໃຫ້ສະມາຊິກໃນຫ້ອງໃຫ້ຮູ້ວ່າ ພຣະຜູ້ເປັນເຈົ້າມີຄວາມສາມາດແລະພຣະອົງເປັນຜູ້ມີສິດ " ເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເປີດເຜີຍຄວາມຄາດໝາຍໃນໃຈມະນຸດດ້ວຍ. " ຊີ້ໃຫ້ສະມາຊິກໃນຫ້ອງເຫັນວ່າ " ການຕັດສິນລ່ວງໜ້າໂດຍບໍ່ຮູ້ເຫດການ " ບໍ່ແມ່ນໜ້າທີ່ຂອງ

ພວກເຮົາ. ໃນກໍຣະນີດຽວກັນ ຄໍາຊົມເຊີຍກໍມາຈາກພຣະຜູ້ເປັນເຈົ້າເຫມືອນກັນ.

5. ໃຫ້ຜູ້ໃດຜູ້ນຶ່ງອ່ານບົດທີ 4:6-7 ດັງໆ. ໃຫ້ຕັ້ງຄໍາຖາມວ່າ <u>ໂປໂລຫມາຍເຖິງບັນຫາອັນໃດທີ່ເກີດຂື້ນໃນຄຣິສຕະຈັກເມືອງໂກຣິນໂທ</u>? (ຖ້າຈໍາເປັນ ໃຫ້ກັບຄືນໄປເບິ່ງບັນຫາກ່ຽວກັບການຂັດແຍ່ງແລະການອິດສາກັນ ເຖິງຄວາມແຕກຕ່າງໃນກຸ່ມພວກເຂົາ - ກຸ່ມຂອງໂປໂລແລະກຸ່ມຂອງອາໂປໂລ.)

6. ກ່ອນຈະອ່ານບົດທີ 4:8-13, ໃຫ້ອ່ານບົດທີ 4:14 ດັງໆ. ໃຫ້ສັງເກດເບິ່ງໂປໂລໄດ້ຮ້ອງຊາວໂກຣິນໂທວ່າ "ພວກເຈົ້າໃນຖານະເປັນລູກທີ່ຮັກຂອງເຮົາ" (4:14) ແລະໃຫ້ສັງເກດອີກໃນ ບົດທີ 4:15 "ແຕ່ພວກເຈົ້າກໍບໍ່ມີພໍ່ຫລາຍຄົນເພາະວ່າ ໃນພຣະເຢຊູຄຣິດແມ່ນເຮົານີ້ແຫລະ."

7. ຕອນນີ້ໃຫ້ຜູ້ໃດຜູ້ນຶ່ງອ່ານ ບົດທີ 4:8-13 ດັງໆ. ຫລັງຈາກນັ້ນ ໃຫ້ຕັ້ງຄໍາຖາມດັ່ງນີ້: <u>ໃນຖານະໂປໂລເປັນບິດາຂອງຊາວໂກຣິນໂທໃນພຣະເຢຊູຄຣິດ, ລາວໄດ້ຮັບຄວາມລໍາບາກຢ່າງໃດ? ພວກເຂົາໄດ້ເຮັດໃຫ້ລາວຜິດຫວັງຢ່າງໃດ? ລາວໄດ້ສະແດງໃຫ້ເຫັນຊີວິດທີ່ມີລັກສະນະຂອງພຣະຄຣິດຢ່າງໃດ</u>? ໃຫ້ໂອກາດທຸກໆຄົນຕອບຄໍາຖາມດັ່ງກ່າວນັ້ນ.

<u>ຫນູນໃຊ້ໃນການກະທໍາ</u>

8. ໃຫ້ໃຊ້ຄໍາຖາມດັ່ງຕໍ່ໄປນີ້ເປັນການສົນທະນາ:

- ຜູ້ນໍາທີ່ດີເປັນເຫມືອນບິດາມານດາທີ່ດີໄດ້ຢ່າງໃດ?
- ມີສິ່ງໃດແດ່ທີ່ພວກເຮົາໄດ້ຮຽນຈາກໂປໂລໃຫ້ເປັນຜູ້ຕິດຕາມທີ່ດີ?

9. ຫນູນໃຈໃຫ້ສະມາຊິກໃນຫ້ອງ ໃຫ້ພຣະຜູ້ເປັນເຈົ້າເປັນຜູ້ນໍາທາງໃນຊີວິດຂອງພວກເຂົາ ແລະໃຫ້ຢໍາເກງພຣະຜູ້ເປັນເຈົ້າແທນທີ່ຈະໄປຢ້ານຄໍາເວົ້າຂອງຄົນ. ນໍາພາສະມາຊິກໃນຫ້ອງໃຫ້ຕຶກຕອງ ຢ່າໄດ້ມີແນວຄິດດັ່ງກ່າວໃນອາທິດນີ້:

- ເປັນຫ່ວງຄໍາເວົ້າຂອງຄົນຫລາຍກວ່າພຣະເຈົ້າ
- ໂອ້ອວດໃນຂອງພຣະຣາຊທານຂອງຄວາມພົ້ນ
- ຕັດສິນຜູ້ນໍາຄຣິສຕຽນແທນທີ່ຈະປະໃຫ້ເປັນພາຣະຂອງພຣະເຈົ້າ
- ເປັນຜູ້ຕິດຕາມມີຈິດໃຈຈອງຫອງ

ໃຫ້ປິດບົດຮຽນດ້ວຍການອະທິຖານໃນບົດເພງສັຣເສີນ 139:23-24.

ອ.ຈ. ບຸນເຮັ່ງ ພົງປຣະພັນ

# ບົດແນະນຳການສິດສອນ
# ບົດຮຽນທີ 5
# ໃຊ້ຊີວິດຄຣິສຕຽນໃນໂລກທີ່ຂາດສິນທຳ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u> 1 ໂກຣິນໂທ 5:1-11; 6:9-20

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> 1 ໂກຣິນໂທ 5:1-6:20

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄຣິສຕຽນຈະຕ້ອງໃຊ້ຊີວິດຝຶກຝົນຕົນເອງໃຫ້ຢູ່ໃນຄວາມຊອບທຳ, ໃຫ້ລະນຶກສເມີວ່າຄວາມລອດພົ້ນມີຜົນສະທ້ອນຊີວິດປະຈຳວັນຂອງພວກເຮົາ, ຮວມທັງວ່າເຮົາຈະເຮັດຢ່າງໃດກັບຮ່າງກາຍຂອງພວກເຮົາ.

<u>ຄຳຖາມເພື່ອການສຳຫລວດ:</u> ຂ້າພະເຈົ້າເປັນຄຣິສຕຽນ, ແຕ່ມີຫຍັງຜິດປົກກະຕິກັບຂ້າພະເຈົ້າ?

<u>ຈຸດປະສົງຂອງບົດຮຽນນີ້:</u> ປະຕິບັດຕາມຫລັກຄຳສອນເຣື່ອງຄວາມຊອບທຳໃນຄຣິສຕະຈັກແລະໃນຊີວິດປະຈຳວັນຕາມຫລັກຄຳສອນຈາກອັຄສາວົກໂປໂລ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ແນະນຳໃຫ້ສະມາຊິກໃນຫ້ອງຮຽນຮູ້ຫົວຂໍ້ຂອງບົດຮຽນນີ້ "ໃຊ້ຊີວິດຄຣິສຕຽນໃນໂລກທີ່ຂາດສິນທຳ". ຊີ້ໃຫ້ພວກເຂົາເຫັນການໃຊ້ຊີວິດຂອງຊາວເມືອງໂກຣິນໂທ ຊຶ່ງໄດ້ນຳຄວາມຫລົ້ມຈົມແລະຄວາມເສື່ອມເສັຽມາສູ່ຄຣິສຕະຈັກ.

### <u>ສຶກສາບົດຮຽນ</u>

2. ໃຫ້ຂຽນໃສ່ເທິງກະດານດ້ວຍຄຳຖາມດັ່ງນີ້: <u>ຄຣິສຕະຈັກໄດ້ມີກົດລະບຽບວິນັຍບໍ່ໃນສມັຍນີ້?</u> ຕໍ່ມາໃຫ້ອ່ານ ບົດທີ 5:1-11 ດັງໆ. ຫລັງຈາກນັ້ນໃຫ້ຕັ້ງຄຳຖາມວ່າ <u>ມີຜູ້ໃດສົງສັຍບໍ່ວ່າ ຄວາມບາບຢູ່ໃນເມືອງໂກຣິນໂທຈະນຳບັນຫາມາສູ່ຄຣິສຕະຈັກ</u>? ຊີ້ໃຫ້ສະມາຊິກໃນຫ້ອງເຫັນວ່າ ໂປໂລບໍ່ໄດ້ຜ່ອນສັ້ນຜ່ອນຍາວເລີຍ ເພາະວ່າຄົນໃນເມືອງນັ້ນເປັນຢ່າງນັ້ນ ສະນັ້ນຄຣິສຕະຈັກເມືອງນັ້ນຈຶ່ງໄດ້ຮັບການຍົກເວັ້ນເປັນພິເສດ. ບໍ່ເລີຍ ຖ້າຜູ້ໃດເຮັດຜິດສິນທຳ ຜູ້ນັ້ນຈະຖືກນຳມາຕັດສິນຕາມກົດລະບຽບວິນັຍ. ໃຫ້ຖາມຕໍ່ໄປວ່າ <u>ໃນສມັຍນີ້ກົດລະບຽບວິນັຍເດັດຂາດຢ່າງນີ້ຍັງໃຊ້ໄດ້ບໍ່</u>? ໃຫ້ໃຊ້ບົດຮຽນໃນຄູ່ມືຂອງສະມາຊິກ ແລະ ພຣະຄັມພີເປັນການອະທິບາຍເຖິງຜູ້ທີ່ເຮັດບາບ ແລະທາງຄຣິສຕະຈັກໄດ້ວາງກົດລະບຽບວິນັຍໄວ້ເພື່ອຈະປະຕິບັດຕໍ່ຄົນນັ້ນຢ່າງໃດ?

3. ໃຫ້ໃຊ້ຂໍ້ຄວາມໃນບົດຮຽນຄູ່ມືຂອງສະມາຊິກ. ເພື່ອນຳມາວິຈັຍຂໍ້ພຣະຄັມພີບົດທີ 5:4-5 ວ່າ ເງື່ອນໄຂສາມຢ່າງກ່ອນຈະຕັດສິນຜູ້ຕ້ອງຫາມີອັນໃດແດ່? ໃຫ້ສຶກສາຕໍ່ໄປຈາກບົດຮຽນໃນຄູ່ມືຂອງສະມາຊິກທີ່ມີຫົວຂໍ້ວ່າ "ຂ່າວເລົ່າລື ກັນ". ພາກປະຕິບັດທີ່ໄດ້ແນະນຳໄປຈາກໂປໂລໃຫ້ຄຣິສຕະຈັກແຫ່ງນີ້ ຮູ້ສຶກວ່າ "ແຮງຫລາຍ" ຕາມກົດລະບຽບທີ່ວາງໄວ້ໃນຄຣິສຕະຈັກສມັຍນີ້. ຫນູນໃຈໃຫ້ສະມາຊິກໃນຫ້ອງຮຽນສົນທະນາສຶກສາກັນເບິ່ງວ່າ ມັນມີຜົນດີຢ່າງໃດ (1) ຕໍ່ສະມາຊິກ ແລະ (2) ຕໍ່ຄຣິສຕະຈັກຕາມການແນະນຳຂອງໂປໂລນີ້.

4. ໃນບົດທີ 5:6-8, ໂປໂລໄດ້ປ່ຽນຫົວເຣື່ອງກ່ຽວກັບ "ການອວດອ້າງ" ແລະຄວາມສັດຊື່ ແລະຄວາມຈິງ. ໃນສມັຍນີ້ພວກເຮົາມີການ "ສົ່ງເສີມກິຈການຂອງຄຣິສຕະຈັກ" ໂດຍມີການປະກາດໃຫ້ສະມາຊິກ ແລະຄົນພາຍນອກຮູ້ວ່າຄຣິສຕະຈັກຂອງພວກເຮົາເຮັດນັ້ນເຮັດນີ້. ໃຫ້ຕັ້ງຄຳຖາມວ່າ <u>ບໍ່ແມ່ນການອວດອ້າງບໍ່? ພວກເຮົາຈະເຮັດຢ່າງໃດ</u>

ຈຶ່ງໃຫ້ສະມາຊິກ ແລະຄົນພາຍນອກຮູ້ໂດຍບໍ່ເປັນການອວດອ້າງ?

5. ໃຫ້ສັງເກດເບິ່ງ ໃນບົດທີ 5:9-11, ໂປໂລໄດ້ອະທິບາຍຢ່າງແຈ່ມແຈ້ງ ເຖິງການໃຊ້ຊີວິດຄຣິສຕຽນໃນໂລກທີ່ຂາດສິນທັມ. ລາວໄດ້ກ່າວວ່າ ໃນຖານະເປັນຄຣິສຕຽນ ພວກເຮົາຢູ່ໃນໂລກ ພວກເຮົາບໍ່ໄດ້ຢູ່ນອກໂລກ. ຕາມຄວາມຈິງແລ້ວ ຖ້າພວກເຮົາຢູ່ແຕ່ໃນຄຣິສຕະຈັກ ພວກເຮົາຈະເປັນພະຍານໃຫ້ກັບຜູ້ທີ່ບໍ່ຮູ້ຈັກກັບພຣະເຈົ້າບໍ່ໄດ້. ໃນຂະນະດຽວກັນພວກເຮົາຈະຕ້ອງຜັກດັນແລະຕໍ່ສູ້ກັບການທົດລອງຂອງໂລກ.

6. ໂປໂລໄດ້ເນັ້ນເຖິງເຣື່ອງຄວາມຮັບຜິດຊອບທັມປະຈຳຕົວຂອງຜູ້ທີ່ເຊື່ອ. ໃຫ້ຜູ້ນຶ່ງອ່ານໃນບົດທີ 6:9-20 ດັງໆ. ໃຫ້ສະມາຊິກໃນຫ້ອງຟັງວ່າ ໂປໂລໄດ້ແນະນຳໃຫ້ວິທີເອົາຊະນະການທົດລອງຈາກການຜິດຊາຍຍິງ ຫລື ເພດສັມພັນໃນທາງຜິດສິນທັມ. ຊີ້ໃຫ້ພວກເຂົາເຫັນຂໍ້ສຳຄັນ ຄື ບົດທີ 6:18 ຄຳວ່າ "ຈົ່ງຫລີກໜີເສັຽ". ໃຫ້ຖາມຄວາມຄິດເຫັນຂອງສະມາຊິກໃນຫ້ອງວ່າ ຈະເຮັດຢ່າງໃດພວກເຂົາຈຶ່ງຈະສາມາດເອົາຊະນະຈາກສິ່ງຜິດສິນທັມໃນຂະນະທີ່ຢູ່ໃນໂລກນີ້.

## ຫມູນໃຊ້ໃນການກະທຳ

7. ໃຫ້ນຳພາສະມາຊິກໃນຫ້ອງສຶກສາ ຄຳຖາມ ຂໍ້ທີ 3 ແລະ 4 ໃນຄູ່ມືຂອງສະມາຊິກ.

8. ຫນູນໃຈສະມາຊິກໃນຫ້ອງໃຫ້ອອກຄວາມຄິດເຫັນວ່າ ຈະໃຊ້ຊີວິດທີ່ຝຶກຝົນຕົນເອງໃຫ້ຢູ່ໃນຫລັກສິນທັມໃນອາທິດຈະມານີ້.

ອ.ຈ. ບຸນເຮັ່ງ ພົງປຣະພັນ

# ຄຳແນະນຳຄຣູສອນ
# ແຕ່ງກະໄດ້ ບໍ່ແຕ່ງກະດີ
# ບົດຮຽນທີ 6

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 7:1-17, 25-35

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 7:1-40

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າຈະແຕ່ງງານຫລືເປັນໂສດກໍຕາມ ຄຣິສຕຽນຈະຕ້ອງຢູ່ເພື່ອຖວາຍກຽດແກ່ພຣະເຈົ້າ.

<u>ຄຳຖາມເພື່ອການສຳຣວດ</u> ເຮົາຈະໃຫ້ຊີວິດການແຕ່ງງານ ແລະຊີວິດທີ່ເປັນໂສດຖວາຍພຣະກຽດແກ່ພຣະເຈົ້າໄດ້ຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ຫມູນໃຊ້ຊີວິດທີ່ແຕ່ງງານຫລືເປັນໂສດໃຫ້ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເທົ່າກັບເປັນແຜນທີ່ນຳທາງແຫ່ງຊີວິດ ແລະເປັນຣິດອຳນາດໃນການປະກາດຂອງພວກເຮົາ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນເຕີບໃຫຍ່.
- ໃຫ້ທຸກຄົນເຂົ້າໃຈວ່າ ມະນຸດທຸກຄົນເປັນສິ່ງພຣະຫັດຂອງພຣະເຈົ້າ.
- ເຮັດໃຫ້ຄອບຄົວຮັກແພງກັນດ້ວຍຄວາມຮັກຊຶ່ງມາຈາກພຣະເຈົ້າ.

<u>ແຜນສຳລັບການສອນ</u>

1. ຂຽນຫົວເຣື່ອງໃສ່ຂ້າງເທິງຂອງກະດານວ່າ "ການເປັນໂສດ ຫລືການແຕ່ງງານອັນໃດດີ"

2. ດ້ານຊ້າຍຂຽນ "ແຕ່ງງານ".

3. ດ້ານຂວາຂຽນ "ເປັນໂສດ"

4. ຫາກມີຄົນໂສດໃນຫ້ອງຮຽນຂໍໃຫ້ເພິ່ນອອກຄຳເຫັນໃນເຣື່ອງຢູ່ເປັນໂສດດີແນວໃດ? ຄຣູຂຽນຄຳເຫັນຂອງເພິ່ນລົງຂ້າງລຸ່ມດ້ານຄຳວ່າ "ເປັນໂສດ"

5. ຂໍໃຫ້ຜູ້ນຶ່ງທີ່ມີຄອບຄົວທີ່ແຂງແຮງດ້ານຄວາມຮັກອອກຄຳເຫັນເຣື່ອງແຕ່ງງານດີແນວໃດ? ຄຣູຂຽນສິ່ງທີ່ດີຂ້າງລຸ່ມຄຳວ່າ "ແຕ່ງງານ"

6. ຂໍຜູ້ນຶ່ງອ່ານ 1ໂກຣິນໂທ 7:1-17 ເປັນຫົວຂໍ້ທີນຶ່ງຂອງບົດຮຽນ.

7. ຫລັງຈາກອະທິບາຍຫົວຂໍ້ທີ 1 ແລ້ວ ຂໍໃຫ້ອີກຜູ້ນື່ງອ່ານ 1 ໂກຣິນໂທ 7: 25-35.

8. ສລຸບຄໍາເຫັນຂອງໂປໂລ ຢາກໃຫ້ເປັນໂສດ ແມ່ນຂໍ້ 1, 7, 8, 9, 28 ແລະ 37.

9. ສລຸບຄໍາເຫັນຂອງໂປໂລ ຢາກໃຫ້ແຕ່ງງານແມ່ນຂໍ້ 2, 27 ແລະ 28.

<u>ຄໍາຖາມ</u>

1. ຖາມຄົນໂສດ. ຫາກທ່ານມີຜົວຫລືເມັຽທ່ານຈະເຮັດແນວໃດເພື່ອຖວາຍກຽດແກ່ພຣະເຈົ້າ?

2. ຖາມຄົນໂສດ. ທ່ານຈະເຮັດໃຫ້ຊີວິດໂສດຂອງທ່ານຖວາຍກຽດແກ່ພຣະເຈົ້າຢ່າງໃດ?

3. ຖາມຄົນມີຄອບຄົວ. ທ່ານຈະເອົາຊີວິດຄອບຄົວຂອງທ່ານຖວາຍກຽດແກ່ພຣະເຈົ້າແນວໃດ?

4. ທ່ານຜູ້ກໍາລັງຄິດຈະປະຮ້າງກັນທ່ານຄິດແນວໃດກັບບົດຮຽນນີ້?

5. ທ່ານຜູ້ທີ່ປະຮ້າງກັນແລ້ວບົດຮຽນນີ້ສອນທ່ານແນວໃດ?

6. ເລົ້າໂລມໃຫ້ນັກຮຽນໃຫ້ຫມູນໃຊ້ຊີວິດເປັນໂສດ ຫລືມີຄອບຄົວໄດ້ຖວາຍກຽດແກ່ພຣະເຈົ້າ ເພາະຄົນອື່ນກໍາລັງ
   ເບິ່ງເຮົາຢູ່. ແລະອ້ອນວອນປິດ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນ 7
# ເຣື່ອງທີ່ຍັງສົງສັຍ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 8:1-13; 9:19-26; 10:14-33
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> 1 ໂກຣິນໂທ 8:1--11:1
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເຖິງເຮົາຈະຣູ້ວ່າການປະພຶດນັ້ນບໍ່ໄດ້ຜິດຕໍ່ຄຳສອນ, ພວກເຮົາທີ່ເປັນຄຣິສຕຽນຈະຕ້ອງບໍ່ເຮັດໃນສິ່ງທີ່ພາໃຫ້ຄົນອື່ນສະດຸດໃຈ ຫລືໃນສິ່ງທີ່ຈະບໍ່ເປັນພະຍານອັນດີງາມກັບຄົນຂ້າງນອກ.
<u>ຄຳຖາມເພື່ອການສຳຣວດ:</u> ມີຫລັກການອັນໃດທີ່ຈະຊ່ວຍນຳທາງ ໃນເມື່ອພວກເຮົາບໍ່ແນ່ໃຈໃນຄຳສອນ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຊ່ວຍນັກຮຽນໃຫ້ຮູ້ຫລັກການຈາກພຣະທັມ ທີ່ຈະຊ່ວຍເມື່ອມີການສົງສັຍວ່າຈະເລືອກສິ່ງໃດແທ້.

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ແນະນຳບົດຮຽນນີ້ໂດຍການປຽບທຽບລະຫວ່າງບັນຫາຢູ່ໃນຄອບຄົວຝ່າຍຈິດວິນຍານແລະບັນຫາໃນຄອບຄົວຝ່າຍເນື້ອໜັງ. ແຕ້ມວົງມົນສອງວົງໃສ່ກະດານ. ວົງທີນຶ່ງໃຫ້ຂຽນ: ຂ້ານ້ອຍ, ພຣະຄຣິດ, ແລະຄົນອື່ນໆ ໃສ່ໃນກາງ; ວົງທີສອງໃຫ້ຂຽນ: ສາມີ, ພັລຍາ, ແລະລູກ. ບອກນັກຮຽນວ່າຖ້າໃນຊີວິດເຮົາ ມີພຣະຄຣິດແລະຕົວເຮົາເອັງທຸກຢ່າງກໍຄືງ່າຍ; ແຕ່ເມື່ອເຮົາຈຳເປັນຈະຕ້ອງຄິດເຖິງຄົນອື່ນໆໃນການກະທຳທຸກຢ່າງ ຊີວິດນັ້ນກໍເລີຍມີບັນຫາເພີ້ມຂຶ້ນ. ໃນທຳນອງດຽວກັນ, ຖ້າມີແຕ່ສາມີແລະພັລຍາ ຄອບຄົວກໍຄືບໍ່ລຳບາກເທົ່າໃດ; ແຕ່ເມື່ອເຮົາມີລູກມີເຕົ້າເຂົ້າມາຕື່ມໃສ່, ຄອບຄົວນັ້ນກໍຍ່ອມຈະມີບັນຫາຫລາຍຂຶ້ນ.

2. ຕົວຢ່າງຂ້າງເທິງນີ້ຈະເປັນພື້ນຖານເພື່ອຄວາມເຂົ້າໃຈບົດຮຽນໃນຕອນນີ້. ພຣະທັມຕໍ່ໄປນີ້ ບໍ່ພຽງແຕ່ຈະເວົ້າເຖິງການປະພຶດບາງຢ່າງທີ່ເຮັດໃຫ້ມີການສົງສັຍເທົ່ານັ້ນ ພວກເຮົາຍັງຈະໄດ້ຮຽນເຖິງທັສນະທີ່ຖືກຕ້ອງຂອງຄຣິສຕຽນຕໍ່ຄົນທີ່ຍັງຫລົງທາງຢູ່.

## <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ຄຳຖາມ: ຄຣິສຕຽນຄວນຊື້ແລະກິນຊີ້ນທີ່ຖືກນຳໄປຖວາຍຜີແລ້ວບໍ່? ອ່ານ 8:1-8 ໃຫ້ທຸກຄົນໄດ້ຍິນ. ອະທິບາຍພຣະທັມໃນຕອນນີ້. ເຕືອນຄຣິສຕຽນທຸກຄົນໃຫ້ລະວັງໃນການກະທຳ ທີ່ຈະເຮັດໃຫ້ຄົນທີ່ບໍ່ຮູ້ພຣະເຈົ້າສະດຸດໃຈ. ນອກນັ້ນຄຣິສຕຽນທີ່ຮູ້ຫລາຍແລ້ວກໍຄວນລະວັງໃນການໃຊ້ເສຣີພາບຂອງຕົນເພື່ອເຫັນແກ່ຄຣິສຕຽນທີ່ຍັງບໍ່ທັນຮູ້ພໍແລະຄົນຂ້າງນອກທີ່ຍັງບໍ່ຮູ້ພຣະເຈົ້າ. ຊັກຊວນໃຫ້ນັກຮຽນແບ່ງປັນເຣື່ອງທີ່ເຂົາເຈົ້າກຳລັງສົງສັຍຢູ່ເພາະພຣະທັມບໍ່ໄດ້ສອນຢ່າງແຈ່ມແຈ້ງ.

4. ເບິ່ງຄວາມຈິງທີ່ໂປໂລສອນເລື່ອງການກິນຊີ້ນ ແລະການໃຊ້ຄວາມລະມັດລະວັງເພື່ອຈະບໍ່ໃຫ້ຄົນອື່ນສະດຸດໃນ 9: 19- 26. ໃຫ້ຜູ້ນຶ່ງອ່ານ. ເບິ່ງຫົວຂໍ້ໃຫຍ່, "ເສຣີຊົນຍອມເປັນທາດຮັບໃຊ້." ຄຣິສຕຽນມີອິສຣະພາບໃນການກະທຳຫລາຍໆຢ່າງ; ແຕ່ຄຣິສຕຽນຍອມໃຫ້ຄວາມຮັກທີ່ມີຕໍ່ພຣະເຈົ້າ ແລະເພື່ອນມະນຸດເປັນສິ່ງນຳພາໃນການປະພຶດຂອງຕົນ (9:24-27). ອະທິບາຍຄວາມໃກ້ຄຽງລະຫວ່າງການບັງຄັບຕົນເອງຂອງຄຣິສຕຽນແລະການບັງຄັບຕົນເອງຂອງນັກກິລາທີ່ຝຶກຝົນຕົວເອງເພື່ອການແຂ່ງຂັນ. ໃຫ້ບາງຄົນເວົ້າເລື່ອງປະສົບການສ່ວນຕົວ. ເຕືອນທຸກຄົນໃຫ້ຖືເອົາຫລັກຄຳສອນຂອງໂປໂລ ເວລາເຂົາເຈົ້າເກີດມີຄວາມສົງສັຍໃນພຣະທັມຄຳສອນບາງຕອນ.

5. ພິຈາຣະນາເບິ່ງຄຳຖາມນີ້, "ຄຣິສຕຽນຄວນໄປຮ່ວມໃນການໄຫວ້ວອນແລະພິທີຖວາຍພຣະທຽມບໍ່? ອ່ານ 8: 9-13; 10:14-22. ຄຳຕອບກໍຄື "ບໍ່" ເພາະຄຣິສຕຽນບໍ່ຄວນມີສ່ວນໃນເລື່ອງພວກນີ້.

6. ຄຣິສຕຽນຄວນຮັບການເຊີນໄປກິນລ້ຽງໃນບ້ານຂອງຄົນທີ່ບໍ່ຮູ້ພຣະເຈົ້າ ທີ່ຈະມີການກິນຊີ້ນທີ່ໄດ້ນຳໄປຖວາຍຜີແລ້ວ ຫລືບໍ່? ໃຫ້ຄົນນຶ່ງອ່ານ 10:23-30 ແລະພຍາຍາມສັງເກດເບິ່ງຄຳຕອບຂອງໂປໂລ. (ໄປໄດ້ ແລະກິນໄດ້ ຖ້າເຈົ້າພາບບໍ່ໄດ້ບອກລ່ວງໜ້າວ່າຊີ້ນນັ້ນມາຈາກໃສ). ອະທິບາຍຄຳຕອບຂອງໂປໂລ ຖ້າເຫັນວ່າຈຳເປັນ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

7. ພານັກຮຽນເບິ່ງ<u>ເລື່ອງທີ່ຍັງສົງສັຍຢູ່</u>ໃນບົດຮຽນທີ່ໄດ້ຮຽນມາ. ຂຽນເລື່ອງເຫລົ່ານັ້ນໃສ່ກະດານ. ຊ່ວຍທຸກຄົນໃຫ້ແນ່ໃຈ ຫລັກການທີ່ສອນໃນບົດຮຽນກ່ຽວກັບເລື່ອງທີ່ຍັງສົງສັຍຢູ່. ຊັກຊວນໃຫ້ນຳໄປໃຊ້ໃນຊີວິດໃນເວລາເກີດຄວາມບໍ່ແນ່ໃຈ ຫລືຫາຄຳຕອບທີ່ແຈ່ມແຈ້ງບໍ່ພົບໃນພຣະທັມຄຳສອນບາງຕອນ.

8. ຕອບຄຳຖາມສາມຂໍ້ ໃນພາກສຸດທ້າຍຂອງບົດຮຽນ. ໃຫ້ທຸກຄົນໄດ້ພິຈາຣະນາ ແລະໃຊ້ເວລາສວົບເພື່ອການໂຕ້ຕອງຄຳຕອບຂອງໃຜລາວ.

ດຣ. ສີດາ ຄາມ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນບົດທີ 8
# ການນະມັສການບອກເຖິງຕົວທ່ານແນວໃດ?

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 11:2-16
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> 1 ໂກຣິນໂທ 11:2-16
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການປະພຶດຂອງຜູ້ນະມັສການຄວນຈະເປັນພະຍານທີ່ດີສຳລັບຄົນໃນສມັຍຂອງຜູ້ນັ້ນ.
<u>ຄຳຖາມເພື່ອການສຳຣວດ:</u> ຜູ້ນະມັສການຈະປະພຶດຕົນແນວໃດເພື່ອຈະໄດ້ເປັນພະຍານທີ່ດີໃຫ້ກັບຄົນໃນສມັຍຂອງພວກເຂົາ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍຄຳສອນຂອງໂປໂລສຳລັບຜູ້ຍິງແລະຜູ້ຊາຍໃນເວລານະມັສການ ແລະເພື່ອຈະໄດ້ຮູ້ວິທີການເພື່ອນຳມາໃຊ້ໃນຄຣິສຕະຈັກຂອງພວກເຮົາ.

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ສຳຣວດເບິ່ງຄວາມຮູ້ສຶກຂອງນັກຮຽນໃນຂໍ້ຄວາມຂ້າງລຸ່ມນີ້; ແຕ່ລະຄັ້ງໃຫ້ນັບເບິ່ງວ່າ "ເຫັນດີ" ມີຈັກສຽງ ແລະ "ບໍ່ເຫັນດີ" ມີຈັກສຽງ (ທ່ານອາດຈະໃຫ້ຜູ້ນຶ່ງບັນທຶກຈຳນວນໄວ້ໃນກະດານ).
   (1). ຜູ້ຍິງບໍ່ຄວນປາກໃນເວລານະມັສການ; ເຂົາຄວນຈະນັ່ງຟັງຢ່າງດຽວ.
   (2). ຜູ້ຍິງຄວນອະທິຖານອອກສຽງໃນເວລານະມັສການ.
   (3). ຜູ້ຍິງບໍ່ຄວນສອນຫ້ອງຮຽນວັນອາທິດ.
   (4). ຜູ້ຊາຍແລະຜູ້ຍິງຄວນຢູ່ຫ້ອງດຽວກັນໃນຫ້ອງຮຽນວັນອາທິດ.
   (5). ຜູ້ຍິງບໍ່ຄວນຮັບໃຊ້ໃນຄະນະກັມມະການຂອງໂບດ.
   (6). ການເທສນາເປັນໜ້າທີ່ຂອງຜູ້ຊາຍ, ບໍ່ແມ່ນວຽກຜູ້ຍິງ.
   (7). ຄຣິສຕະຈັກບໍ່ຄວນສະຖາປະນາຜູ້ຍິງເປັນນັກຄະນາຍົກ.
   (8). ຄຣິສຕະຈັກບໍ່ຄວນຈ້າງພະນັກງານຜູ້ຍິງ.
   (9). ຜູ້ຍິງບໍ່ຄວນເປັນຜູ້ຖືຂັນຖວາຍໃນເວລານະມັສການ.
   (10). ນັກປະກາດຜູ້ຍິງບໍ່ໄດ້ຜົນດີເໝືອນນັກປະກາດຜູ້ຊາຍ.

   ສົນທະນາຄຳຕອບຕ່າງໆຕາມສົມຄວນ; ແນະນຳບົດຮຽນເຣື່ອງຄຳສັ່ງສອນຂອງໂປໂລກ່ຽວກັບພາກສ່ວນຂອງຜູ້ຍິງໃນເວລານະມັສການ.

## <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ກ່ອນນັກຮຽນຈະມາເຖິງໃຫ້ຂຽນຫົວຂໍ້ໃຫຍ່ ໃສ່ໂປສເຕີ.
   - ການນະມັສການໃນພຣະຄັມພີ (1 ກຣທ 11:2)

- ເຫັນຄວາມສຳຄັນຂອງຜູ້ນະມັສການດ້ວຍກັນ (1 ກຣທ 11:3)
- ຢ່າລືມພວກທີ່ກຳລັງເບິ່ງທ່ານ (1 ກຣທ 11:14-15)
- ຢ່າໃຫ້ມີການແບ່ງແຍກ (1 ກຣທ 11:16)

3. ຖາມນັກຮຽນ: ການຈົດຈຳສິ່ງທີ່ເພື່ອນຂອງທ່ານຮ້ອງຂໍໃຫ້ທ່ານເຮັດສຳຄັນບໍ່? ທ່ານບັນທຶກສິ່ງນັ້ນໄວ້ບໍ່? ທ່ານມັດສາຍເຊືອກໃສ່ນິ້ວມືໄວ້ເພື່ອເຕືອນສະຕິ ບໍ່ໃຫ້ລືມຄຳຂໍນັ້ນບໍ່? ຕຽມສາຍເຊືອກສີ່ເສັ້ນແລະເທັບຕິດມາພ້ອມ.

4. ໃຊ້ເທັບຕິດສາຍເຊືອກເສັ້ນນຶ່ງໃສ່ ຫົວຂໍ້ທີນຶ່ງ ແລ້ວຊວນທຸກຄົນໃຫ້ອ່ານ 1 ກຣທ 11:2 ພ້ອມໆກັນ. ເບິ່ງຄວາມຊົມເຊີຍ ຂອງໂປໂລສຳລັບຄຣິສຕຽນທີ່ໂກຣິນໂທ ເພາະເຂົາເຈົ້າຍັງຈົດຈຳຄຳສອນຂອງທ່ານແລະພາກັນປະຕິບັດຕາມທຸກໆສິ່ງ. ເວົ້າເຣື່ອງຄວາມສຳພັນຂອງໂປໂລກັບຊາວໂກຣິນໂທ.

5. ໃຊ້ເທັບຕິດສາຍເຊືອກເສັ້ນນຶ່ງໃສ່ຫົວຂໍ້ທີສອງ. ໃຫ້ຜູ້ນຶ່ງອ່ານ 1 ກຣທ 11:3. ສັງເກດເບິ່ງຄຳສອນຂອງໂປໂລກ່ຽວກັບຄວາມສັມພັນຣະຫວ່າງຜູ້ຊາຍແລະຜູ້ຍິງໃນບົດບັລຍາຍ. ຖາມນັກຮຽນ: ທ່ານຄິດວ່າສິ່ງເຫລົ່ານີ້ມີຄວາມໝາຍແນວໃດສຳລັບສັງຄົມໃນປັດຈຸບັນ? ຊັກຊວນນັກຮຽນໃຫ້ຮັບຮູ້ຜູ້ທີ່ນະມັສການຮ່ວມກັບພວກເຂົາ.

6. ໃຊ້ເທັບຕິດສາຍເຊືອກເສັ້ນນຶ່ງໃສ່ຫົວຂໍ້ທີສາມ. ອ່ານ 1 ກຣທ 11:4-15 ໃຫ້ທຸກຄົນໄດ້ຍິນ. ອະທິບາຍບົດຮຽນພາກນີ້ໂດຍໃຊ້ຄຳບັລຍາຍໃນບົດຮຽນຊ່ວຍ. ເນັ້ນຄວາມສຳຄັນຂອງການປົກຫົວສຳລັບຜູ້ຍິງໃນສມັຍນັ້ນ. ຄຳຖາມ: ຄຳສອນຂອງໂປໂລໃຊ້ໄດ້ກັບຄົນໃນສມັຍນີ້ບໍ່?

7. ໃຊ້ເທັບຕິດສາຍເຊືອກເສັ້ນນຶ່ງໃສ່ຫົວຂໍ້ສຸດທ້າຍ. ອ່ານ 1 ກຣທ 11:16. ເວົ້າເຖິງຄວາມແຕກແຍກທີ່ໂກຣິນໂທໃນສມັຍທີ່ໂປໂລກຳລັງຂຽນຈົດໝາຍສບັບນີ້. ຖາມຄວາມເຫັນຈາກນັກຮຽນໃນເຣື່ອງຄວາມແຕກແຍກທີ່ອາດຈະເກີດຂຶ້ນໃນສມັຍນີ້ກ່ຽວກັບການນະມັສການ. ຊັກຊວນທຸກຄົນໃຫ້ສ້າງຄວາມສາມັກຄີໃນຄຣິສຕະຈັກ,ໂດຍສເພາະແມ່ນເຣື່ອງການນະມັສການພຣະເຈົ້າ.

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

8. ຢາຍສາຍເຊືອກໃຫ້ນັກຮຽນແຕ່ລະຄົນ. ນຳພາການອະທິຖານເພື່ອທຸກຄົນຈະໄດ້ປັບປຸງແກ້ໄຂການນະມັສການຂອງເຂົາເຈົ້າ. ໃຫ້ທຸກຄົນຮັກສາສາຍເຊືອກນີ້ໄວ້ໃນພຣະຄັມພີ ເພື່ອເປັນສິ່ງເຕືອນໃຈວ່າເຂົາຈະປັບປຸງການນະມັສ ການຂອງຕົນເອງ. ປິດການຮຽນ.

ດຣ. ສີດາ ຄານ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ເຣື່ອງສີນມະຫາສນິດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 11:17-34
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> 1 ໂກຣິນໂທ 11:17-34
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄຣິສຕຽນຈະຕ້ອງສເລີມສລອງສີນມະຫາສນິດດ້ວຍຄວາມໂຄຣົບ ແລະຄວາມສາມັກຄີກັບຄຣິສຕຽນຄົນອື່ນໆ ເພາະເປັນໂອກາດເພື່ອການລະນຶກເຖິງພຣະຄຣິດຜູ້ທີ່ໄດ້ວາຍພຣະຊົນຂອງພຣະອົງເອງເພື່ອພວກເຂົາທັງຫລາຍ.
<u>ຄຳຖາມເພື່ອການສຳຣວດ:</u> ການຖືສີນມະຫາສນິດທີ່ແທ້ມີລັກສະນະແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອນຳພານັກຮຽນໃຫ້ສຳຣວດເບິ່ງຕົວເອງໃນການຖືສີນມະຫາສນິດ ແລະເພື່ອຈະໄດ້ແກ້ໄຂໃຫ້ຖືກຕ້ອງຕາມຄຳສັ່ງສອນຂອງໂປໂລໃນບົດຮຽນນີ້.

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ກ່ອນນີ້ຈະສອນບົດຮຽນນີ້ ໃຫ້ຂຽນຄຳຖາມດັ່ງຕໍ່ໄປນີ້ໃສ່ກະດາດຂນາດ 4×6:
   (1) ຈຸດປະສົງຂອງພິທີສີນມະຫາສນິດຄືຫຍັງ?
   (2) ໃຜຄວນຈະເຂົ້າຮ່ວມພິທີສີນມະຫາສນິດ?
   (3) ມີບັນຫາຫຍັງແດ່ໃນກຸ່ມຄຣິສຕຽນທີ່ໂກຣິນໂທ ທີ່ໂປໂລເວົ້າເຖິງໃນພຣະທັມຕອນນີ້?
   (4) ຄົນທີ່ບໍ່ຮູ້ພຣະເຈົ້າຈະຄິດແນວໃດເວລາເຂົາເຈົ້າເຫັນພິທີສີນມະຫາສນິດເທື່ອທຳອິດ?
   (5) ພວກເຮົາຈະນະມັສການພຣະຄຣິດເປັນທາງສ່ວນຕົວໄດ້ຢ່າງໃດ ໃນຂະນະທີ່ເຮົາຮັບສີນ?

   ຕິດກະດາດທີ່ມີຄຳຖາມນັ້ນໃສ່ກ້ອງຕັ່ງນັ່ງ (ບາງບ່ອນ) ກ່ອນນັກຮຽນຈະມາເຖິງ.

   <u>ສ່ວນປະກອບໃນການສອນ:</u> ເອົາເຂົ້າຈີ່ນຶ່ງກ້ອນ ແລະນ້ຳອະງຸ່ນນຶ່ງກະໂຖຕັ້ງໄວ້ເທິງໂຕະຕໍ່ໜ້ານັກຮຽນ. ເອົາເຄື່ອງຫລິ້ນເທັບ ແລະເພັງສຳລັບນະມັສການມາພ້ອມ. <u>ຂຽນໃສ່ກະດານໄວ້</u>: ເຊີນນັ່ງຢ່າງງຽບໆ, ເຊີນຟັງເພງ, ແລະອ່ານ 1 ກຣທ 11: 17-34. ພິຈາຣະນາເບິ່ງຄຳສອນຂອງໂປໂລໃນພຣະທັມນັ້ນ.

2. ໃນຂະນະທີ່ນັກຮຽນກຳລັງມາເຖິງໃຫ້ເປີດເທັບເພງຄ່ອຍໆ. ຊີ້ມືໃສ່ກະດານເພື່ອເຂົາເຈົ້າຈະໄດ້ເຫັນ. ໃຫ້ເວລາເພື່ອທຸກຄົນຈະໄດ້ເຮັດຕາມຄຳແນະນຳທີ່ຂຽນໄວ້ໃນກະດານ.

## <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

(ໃຫ້ນັກຮຽນເບິ່ງກ້ອງຕັ່ງຂອງໃຜລາວ. ຜູ້ທີ່ມີຄຳຖາມໃຫ້ຮັກສາໄວ້ເພາະລາວໄດ້ຖືກເລືອກໄວ້ເພື່ອຈະອ່ານຄຳຖາມນັ້ນເມື່ອເຖິງເວລາ)

3. ໃຫ້ນັກຮຽນຄົນນຶ່ງອ່ານຄໍາຖາມທີ່ນຶ່ງ: (1) ຈຸດປະສົງຂອງພິທີສິນມະຫາສນິດຄືຫຍັງ? ຂຽນຄໍາຕອບທີ່ນັກຮຽນໃຫ້ໃສ່ກະດານ. (ຄໍາຕອບອາດຈະແມ່ນ: ເພື່ອລະນຶກເຖິງພຣະຄຣິດ, ປະກາດການສິ້ນພຣະຊົນ ຈົນກວ່າພຣະອົງຈະສະເດັດກັບມາ, ພິສູດຕົວເອງ, ແລະຕໍ່ໆໄປ.)

4. ໃຫ້ອີກຄົນນຶ່ງອ່ານຄໍາຖາມທີສອງ: (2) ໃຜຄວນຈະເຂົ້າຮ່ວມພິທີສິນມະຫາສນິດ? ເພາະວ່າພຣະຄຣິດໄດ້ໃຫ້ຄໍາສັ່ງນີ້ກັບພວກສາວົກ, ສະນັ້ນຜູ້ທີ່ເຊື່ອໃນພຣະອົງເທົ່ານັ້ນຈະໄດ້ມີສ່ວນໃນພິທີສິນມະຫາສນິດນີ້.

5. ໃຫ້ຄົນນຶ່ງອ່ານຄໍາຖາມທີສາມ: (3) ມີບັນຫາຫຍັງແດ່ໃນກຸ່ມຄຣິສຕຽນທີ່ໂກຣິນໂທ ທີ່ໂປໂລເວົ້າເຖິງໃນພຣະທັມຕອນນີ້? ໃຫ້ໂອກາດເພື່ອການຕອບ ເຊັ່ນວ່າ ການແຕກແຍກ, ການສະແດງຕົວ, ກິນກ່ອນທຸກຄົນມາເຖິງ, ບາງ ຄົນບໍ່ໄດ້ກິນຫຍັງເລີຍ, ບາງຄົນກິນຈົນເມົາ. ຂຽນຄໍາຕອບຂອງນັກຮຽນໃສ່ກະດານ. ໃຊ້ບົດຮຽນຊ່ວຍ.

6. ໃຫ້ຄົນນຶ່ງອ່ານຄໍາຖາມທີສີ່: (4) ຄົນທີ່ບໍ່ຮູ້ພຣະເຈົ້າຈະຄິດແນວໃດເວລາເຂົາເຈົ້າໄດ້ເຫັນພິທີສິນມະຫາສນິດ ເທື່ອທໍາອິດ? ເຕືອນທຸກຄົນວ່າການສລອງສິນນີ້ແມ່ນການສະແດງເຖິງຄວາມສາມັກຄີໃນກຸ່ມຄົນຂອງພຣະເຈົ້າ. ການສລອງນີ້ເປັນການສແດງໃຫ້ຄົນພາຍນອກຮູ້ວ່າພວກເຮົາເຊື່ອໃນອົງພຣະຄຣິດ. ໃຊ້ຄໍາອະທິບາຍໃນຫົວຂໍ້ "ເປັນພະຍານໃຫ້ກັບຊາວໂລກ."

7. ໃຫ້ຄົນນຶ່ງອ່ານຄໍາຖາມທີຫ້າ: (5) ພວກເຮົາຈະນະມັສການພຣະຄຣິດເປັນທາງສ່ວນຕົວໄດ້ຢ່າງໃດ ໃນຂະນະທີ່ເຮົາຮັບສິນ? ອ່ານຂໍ້ 28-29 ໃຫ້ທຸກຄົນໄດ້ຍິນ. ຄໍາເວົ້າສອງຄໍາທີ່ສໍາຄັນທີ່ສຸດ ມີຄໍາໃດແດ່? (ພິຈາຣະນາ, ພິພາກສາ) ພຣະເຈົ້າມີພຣະປະສົງໃຫ້ພວກເຮົາພິຈາຣະນາ (ພິສູດ) ຕົວເອງເພາະພຣະອົງຕ້ອງການຈະຮ່ວມສາມັກຄີທັມກັບພວກເຮົາ. ຈຸດປະສົງຂອງການສໍາຣວດຕົວເອງນີ້ກໍຄືການພິພາກສາ ຫລືຕີສອນ. ພວກເຮົາຕີສອນລູກໆທັງຫລາຍແມ່ນເພື່ອຜົນປໂຍດຂອງພວກເຂົາເອງ. ພຣະເຈົ້າກໍມີພຣະປະສົງເຊັ່ນດຽວກັບພວກເຮົາ.

## ນໍາບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)

8. ແນະນໍານັກຮຽນແຕ່ລະຄົນໃຫ້ເຮັດຕາມຄໍາສອນໃນບົດຮຽນນີ້ກ່ອນທີ່ພວກເຂົາເຈົ້າຈະເຂົ້າຮ່ວມພິທີສິນມະຫາສນິດໃນຄັ້ງຕໍ່ໆໄປ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ເຣື່ອງຂອງພຣະຣາຊທານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ໂກຣິນໂທ 12:4-31
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: 1 ໂກຣິນໂທ 12:1-31
ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງໂຜດປະທານໂດຍທາງພຣະວິນຍານ ຂອງພຣະຣາຊທານຕ່າງໆສຳລັບຄຣິສຕຽນແຕ່ລະຄົນເພື່ອປໂຍດຮ່ວມກັນ.
ຄຳຖາມເພື່ອການສຳຣວດ: ທ່ານໄດ້ໃຊ້ຂອງພຣະຣາຊທານທີ່ທ່ານໄດ້ຮັບເພື່ອຫຍັງແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ວຍນັກຮຽນໃຫ້ຮູ້ວ່າພວກເຮົາຈະໃຊ້ຂອງພຣະຣາຊທານຢ່າງໃດ?

## ແຜນສຳລັບການສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ໃນຂະນະທີ່ທ່ານຈະເລີ້ມການສອນ, ເຊີນນັກຮຽນຄົນນຶ່ງໃຫ້ມາຢືນຢູ່ຕໍ່ໜ້າຂອງທ່ານ. ເອົາປາກກາຍື່ນໃຫ້ລາວ ແລ້ວຖາມວ່າ: ຖ້າຂ້ອຍຢາກຈະເອົາປາກກາເຫລັ້ມນີ້ໃຫ້ເຈົ້າ, ເຈົ້າຈະຕ້ອງເຮັດຫຍັງແດ່ເພື່ອຈະຮັບເອົາ? ຫລັງຈາກນັກຮຽນຮັບປາກກາຈາກທ່ານແລ້ວໃຫ້ເວົ້າວ່າ: ຂ້ອຍມອບປາກການັ້ນໃຫ້ເຈົ້າເພາະຂ້ອຍເຊື່ອວ່າເຈົ້າຈະໃຊ້ມັນໃຫ້ເປັນປໂຍດ. ຂ້ອຍຢາກໃຫ້ເຈົ້າຊ່ວຍຂຽນຈົດໝາຍຫານັກຮຽນທີ່ຂາດໂບດ ແລະຂຽນຂອບໃຈນັກຮຽນຜູ້ທີ່ເອົາໃຈໃສ່. ບອກໃຫ້ທຸກຄົນຮູ້ວ່າຈາກຕົວຢ່າງທີ່ເຂົາເຈົ້າໄດ້ເຫັນແລ້ວນີ້ ຂໍໃຫ້ທຸກຄົນເຂົ້າໃຈວ່າພຣະເຈົ້າຊົງໃຫ້ຂອງພຣະຣາຊທານແກ່ພວກເຮົາທຸກຄົນເພື່ອຈະໄດ້ນຳໄປໃຊ້ເພື່ອປໂຍດສ່ວນຣວມ.

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຖາມນັກຮຽນວ່າເວລາເຂົາເຈົ້າໄດ້ຍິນຄຳວ່າ "ອາຈານ" ພວກເຂົາເຈົ້າມີຄວາມຄິດແນວໃດ? ຫລືວ່າເວລາໄດ້ຍິນຄຳວ່າ "ສະມາຊິກ" ເຂົ້າເຈົ້າມີຄວາມຄິດແນວໃດ? ເຕືອນທຸກຄົນວ່າໃນຄຳສອນຂອງໂປໂລເຣື່ອງຂອງພຣະຣາຊທານນີ້ ທ່ານບໍ່ໄດ້ຈຳແນກຄົນສອງຈຳພວກນີ້. ພວກເຮົາທຸກຄົນຈະຕ້ອງໃຊ້ຂອງພຣະຣາຊທານທີ່ພຣະເຈົ້າຊົງໃຫ້ເພື່ອການເຕົ້າໂຮມໄພ່ພົນຂອງພຣະເຈົ້າໃນການເສີມສ້າງຄຣິສຕະຈັກຂອງພຣະອົງ.

3. ເຊີນແຕ່ລະຄົນໃຫ້ອ່ານ 1 ກຣທ 12:4-31 ຢ່າງງຽບໆ. ໃຫ້ແຕ່ລະຄົນຊອກຫາວ່າຂອງພຣະຣາຊທານໃນພຣະທັມຕອນນີ້ມີຫຍັງແດ່. ໃຊ້ບົດຮຽນເພື່ອຊ່ວຍໃນການອະທິບາຍຂອງພຣະຣາຊທານແຕ່ລະຢ່າງ. ຄຳຖາມ: ໃຜເປັນຜູ້ໃຫ້ຂອງພຣະຣາຊທານ? ພວກເຮົາຈະເຮັດຫຍັງແດ່ເພື່ອຈະໄດ້ຂອງພຣະຣາຊທານເຫລົ່ານັ້ນ? ທ່ານໄດ້ເຫັນຂອງພຣະຣາຊທານຂອງທ່ານໃນພຣະທັມຕອນນີ້ບໍ່? ເຕືອນທຸກຄົນວ່າ ພວກເຮົາໄດ້ຮັບຂອງພຣະຣາຊທານບໍ່ແມ່ນດ້ວຍສິ່ງທີ່ເຮົາກະທຳ ແຕ່ແມ່ນພຣະເຈົ້າໂດຍທາງພຣະວິນຍານບໍຣິສຸດເປັນຜູ້ໄດ້ຊົງປະທານໃຫ້.

4. ໃຫ້ນັກຮຽນຄົນນຶ່ງອ່ານຂໍ້ 12-13 ເພື່ອທຸກຄົນຈະໄດ້ຍິນນຳ. ຖາມ: ໂປໂລໃຊ້ຂອງປຽບທຽບແນວໃດເພື່ອອະທິບາຍເຣື່ອງຄຣິສຕະຈັກ? (ຮ່າງກາຍແລະອະວັຍວະ) ໃຊ້ຄຳອະທິບາຍຈາກບົດຮຽນໃນຫົວຂໍ້ "ຢືນຢັນເຖິງຄວາມສາມັກຄີ" ເພື່ອບັລຍາຍບົດຮຽນໃນພາກນີ້. ເວົ້າເຖິງຄົນຫລາຍໆຈຳພວກໃນສມັຍນັ້ນທີ່ຢູ່ໃນຄຣິສຕະຈັກເມືອງໂກຣິນໂທ (ຄົນຕ່າງຊາດ, ຄົນຊາດຢິວ, ພວກຂ້ອຍທາດ, ພວກມີເສຣີ, ຜູ້ຊາຍ, ຜູ້ຍິງ). ບອກນັກຮຽນວ່າ ເຖິງຈະມີຄົນຫລາຍຈຳພວກໃນຄຣິສຕະຈັກ ພວກເຂົາເຈົ້າກໍເປັນອັນນຶ່ງອັນດຽວກັນໃນພຣະຄຣິດ. ຖາມ: ຄວາມເປັນອັນນຶ່ງອັນດຽວກັນມີຄວາມສຳຄັນແນວໃດໃນເຣື່ອງການໃຊ້ຂອງພຣະຣາຊທານໃຫ້ຖືກຕ້ອງ? (ເພື່ອຈະໄດ້ເປັນພະຍານທີ່ດີໃຫ້ກັບຄົນຊາວໂລກ).

5. ໃຫ້ນັກຮຽນຄົນນຶ່ງອ່ານຂໍ້ 14-27. ເຕືອນນັກຮຽນ: ມີຫລາຍໆຄຣິສຕະຈັກເຫັນວ່າການໃຊ້ຂອງພຣະຣາຊທານບໍ່ມີຄວາມສຳຄັນ. ຖາມ: ຄວາມປຽບທຽບທີ່ໂປໂລກ່າວໄວ້ຢູ່ໃນຂໍ້ 14-26 ບອກເຖິງຜົນຮ້າຍແນວໃດແດ່? ຊັກຊວນນັກຮຽນໃຫ້ພາກັນຮັບໃຊ້ໃນວຽກທີ່ຫລາຍຄົນຄິດວ່າເປັນວຽກຕ່ຳຕ້ອຍ ຫລືເປັນວຽກທີ່ບໍ່ຢູ່ໃນສາຍຕາຂອງທຸກຄົນຕລອດໄປ ແຕ່ກໍເປັນວຽກທີ່ຈຳເປັນ (ການຄົວກິນ, ການຮັບແຂກ, ການເປັນພະຍານ, ການລ້ຽງເດັກ, ແລະວຽກອື່ນໆ). ຂຽນໃສ່ກະດານວຽກໃນຄຣິສຕະຈັກຂອງທ່ານທີ່ຍັງຕ້ອງການພະນັກງານ. ເຕືອນນັກຮຽນອີກເທື່ອ ນຶ່ງວ່າ <u>ໃນຄຣິສຕະຈັກຂອງພຣະເຈົ້າທຸກໆຄົນມີຄວາມສຳຄັນ ແລະຈຳເປັນເພື່ອການກ້າວໜ້າສືວີໄລ.</u>

## <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

6. ເຊີນຊວນໃຫ້ນັກຮຽນແຕ່ລະຄົນໄດ້ສແວງຫາຂອງພຣະຣາຊທານຂອງຕົນ. ປິດການຮຽນໂດຍການອະທິຖານໃຫ້ພຣະເຈົ້າຈົ່ງໄດ້ເປີດເຜີຍໃຫ້ແຕ່ລະຄົນໄດ້ຮູ້ຂອງພຣະຣາຊທານຂອງເຂົາເຈົ້າ ແລະໃຫ້ທຸກຄົນໄດ້ມີຈິດໃຈໃນການທີ່ຈະໃຊ້ຂອງພຣະຣາຊທານເຫລົ່ານັ້ນເພື່ອຜົນປໂຍດຮ່ວມກັນໃນຄອບຄົວແລະຄຣິສຕະຈັກຂອງພຣະອົງ.

ດຣ. ສິດນີ ຄານ

# ຄຳແນະນຳຄຣູສອນ
# ການດຳຣົງຊີວິດທີ່ເປັນປໂຍດ
# ບົດຮຽນທີ 11

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 13:1-13

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 13:1-13

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າການດຳຣົງຊີວິດທີ່ດີທີ່ສຸດນັ້ນແມ່ນການດຳຣົງຊີວິດຮັກຢ່າງພຣະຄຣິດຊົງຮັກ.

<u>ຄຳຖາມເພື່ອການສຳຣວດ</u> ຄວາມຮັກເປັນຮູບຮ່າງແນວໃດ? ຈະຮູ້ໄດ້ຢ່າງໃດວ່າຄວາມຮັກທີ່ອອກຈາກປາກນັ້ນມາຈາກໃຈ? ມັນແຕກຕ່າງກັນຢ່າງໃດໃນຣະຫວ່າງຮັກແລະບໍ່ຮັກ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສະແດງຄວາມຮັກຢ່າງພຣະເຈົ້າຊົງຮັກໃນໂບດຂອງເຮົາ, ໃນເຮືອນແລະໃນຊີວິດປະຈຳວັນຂອງເຮົາ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ເອົາພຣະຄັມພີເປັນຣິດອຳນາດໃນການມີຊີວິດເພື່ອການປະກາດ
- ເສີມຂຍາຍຄວາມເຊື່ອເປັນກ້າວໆໄປ
- ເຫັນຄົນທຸກຄົນເປັນສີພຣະພັດຂອງພຣະເຈົ້າ
- ສົ່ງເສີມຄອບຄົວດ້ວຍຄວາມຮັກຊຶ່ງມາຈາກພຣະເຈົ້າ
- ປະຕິບັດຕາມຄຳສັ່ງຂອງພຣະເຢຊູທຸກດ້ານ

1 ໂກຣິນໂທ 13 ເປັນພຣະຄັມພີທີ່ຄົນທັງຫລາຍຮູ້ຈັກຫລາຍທີ່ສຸດ ເພາະພຣະຄັມພີຕອນນີ້ບັນດາອາຈານທັງຫລາຍພາກັນໃຊ້ໃນເວລາແຕ່ງງານທົ່ວໄປ. ເປັນພຣະຄັມພີຕອນນີ້ສຳຄັນສຳລັບຊີວິດປະຈຳວັນຂອງແຕ່ລະຄອບຄົວ.

## <u>ນຳເຣື່ອງເຂົ້າສູ່ຊີວິດ</u>

1. ຄຣູຂຽນໃສ່ກະດານດັ່ງນີ້:
   ກ. ອາກາເປ.
   ຂ. ຟີເລັຽ.
   ຄ. ອີຣອສ
2. ອາທິບາຍແຕ່ລະຄຳເວົ້າ, ແລະບອກນັກຮຽນໃນຕອນທ້າຍວ່າ ວັນນີ້ເຮົາຈະເວົ້າກັນໃນຄຳວ່າ "ອາກາເປ".

3. ຂໍໃຫ້ຜູ້ນຶ່ງອ່ານ 1 ໂກຣິນໂທ 13: 1-3 ເມື່ອອ່ານຈົບແລ້ວຖາມຜູ້ອ່ານທ່ານເຂົ້າໃຈແນວໃດ?

4. ເປີດໂອກາດໃຫ້ນັກຮຽນອອກຄຳເຫັນ ແລະຄຣູຈຶ່ງນຳເອົາ ຫົວຂໍ້ທີ່ນຶ່ງມາສອນ.

5. ຂໍໃຫ້ຜູ້ນຶ່ງອ່ານຈາກ ຂໍ້ 4-7 ແລະຄຣູຂຽນຫົວຂໍ້ທີ່ສອງລົງໃນກະດານ. ແລະອະທິບາຍດັ່ງຕໍ່ໄປນີ້:

- <u>ອົດທົນດົນນານ</u>,ບໍ່ແມ່ນແຕ່ອົດເທົ່ານັ້ນຕ້ອງທົນອີກດ້ວຍແລະບໍ່ແມ່ນທົນພຽງລະຍະສັ້ນແມ່ນທົນຈົນເຖິງທີ່ສຸດເຫມືອນພຣະເຢຊູອົດທົນຈົນເຖິງສິ້ນໃຈຕາຍ.
- <u>ຊອບເມຕາກະຣຸນາ</u> ຫມາຍເຖິງຊອກສແວງຫາແລະແບ່ງເບົາຜູ້ອື່ນ.
- <u>ບໍ່ເຫິງສາ</u> ຫມາຍເຖິງ ເຫັນຜູ້ອື່ນໄດ້ດີກໍຄວນຍິນດີຮ່ວມກັບເພິ່ນ.
- <u>ບໍ່ອວດອ້າງ</u> ຫມາຍເຖິງບໍ່ຍົກຍ້ອງຕົນເອງໃສ່ຜູ້ອື່ນ.
- <u>ບໍ່ເຮັດການບໍ່ສຸພາບ</u> ຫມາຍເຖິງກິຣິຍາທ່າທາງບໍ່ສົມຄວນ.
- <u>ບໍ່ຄິດເຫັນປະໂຍດຕົນເອງຝ່າຍດຽວ</u> ຫມາຍເຖິງຂ້ອຍພໍໃຈແລ້ວ ສ່ວນຜູ້ອື່ນເປັນຫຍັງກະຢ່ານັ້ນບໍ່ຖືກ.
- <u>ບໍ່ມີໃຈຮ້າຍງ່າຍ</u> ຫມາຍເຖິງອົດກັ້ນຄວາມຮ້າຍໄວ້.
- <u>ບໍ່ຈົດຈຳຄວາມຜິດ</u> ຫມາຍເຖິງ ເຣື່ອງທີ່ແລ້ວຂໍໃຫ້ແລ້ວໄປ,

6. ຂໍໃຫ້ອີກຜູ້ນຶ່ງອ່ານ ຂໍ້ 8-13 ຫລັງຈາກອ່ານຄຣູຂຽນຫົວຂໍ້ທີສາມລົງໃນກະດານ.

- ຖາມນັກຮຽນວ່າເປັນຫຍັງການປະກາດພຣະທັມ ແລະການເວົ້າພາສາແປກໆຈະຕ້ອງຍົກເລີກ?
- ຖາມນັກຮຽນວ່າ ບັດນີ້ຍັງຕັ້ງຢູ່ສາມສິ່ງທີ່ໂປໂລໄດ້ເວົ້າມານັ້ນທ່ານເຂົ້າໃຈແນວໃດ?
- ເມື່ອຄວາມຮັກໃຫຍ່ປານນັ້ນເປັນຫຍັງຄົນເຮົາຈຶ່ງບໍ່ເຫັນ?

7. <u>ສລູບ</u>: ຄວາມຮັກ ອາກາເປ ທີ່ໂປໂລໄດ້ກ່າວມານີ້ ແມ່ນຄວາມຮັກທີ່ຍອມມອບໃຫ້ດ້ວຍໃຈສມັກເປັນການມອບໃຫ້ ດ້ວຍຄວາມຈິງໃຈໂດຍບໍ່ມີຜູ້ໃດບັງຄັບໃຫ້ຮັກ. ເຫມືອນດັ່ງພຣະເຈົ້າຊົງຮັກໂລກຫລາຍຈົນໄດ້ປະທານພຣະບຸດຂອງ ພຣະອົງລົງມາຕາຍແທນຄວາມຜິດບາບຂອງພວກເຮົາ ໂດຍບໍ່ມີໃຜບັງຄັບພຣະອົງໃຫ້ເຮັດເຊັ່ນນັ້ນ. ເມື່ອພຣະອົງຊົງຮັກໂລກເຊັ່ນນັ້ນ ເຮົາທັງຫລາຍຄວນສມັກໃຈຮັກຊຶ່ງກັນແລະກັນເພາະເຮົາທັງຫລາຍເປັນລູກຂອງພຣະອົງ. ໂປໂລ ກ່າວວ່າຫາກເຮົາທັງຫລາຍບໍ່ ອາກາເປ ການປະກາດຂອງເຮົາກໍຈະບໍ່ເປັນປະໂຍດຕໍ່ຣາຊອານາຈັກຂອງພຣະເຈົ້າເພາະເຮົາບໍ່ມີປະສິດຢ່າງດຽວກັນກັບພຣະອົງ, ຄອບຄົວຂອງເຮົາກໍຈະບໍ່ຖືກຕ້ອງປອງດອງກັນເພາະຕ່າງຄົນຕ່າງກໍເອົາແຕ່ໃຈໃຜລາວ ແລະໃນທີ່ສຸດການປະກາດຂອງເຮົາກໍຈະເປັນເຫມືອນຄ້ອງຫລືແຊ່ງທີ່ສົ່ງສຽງເນືອງນັນແລະຂັດຂວາງສຽງມະໂຫຣີ ອື່ນໆເທົ່ານັ້ນ.

8. ຊັກຊວນນັກຮຽນໃຫ້ມີຄວາມຮັກ ອາກາເປ ແລະອ້ອນວອນປິດ.

# ຄຳແນະນຳຄູສອນ
# ຂອງພຣະຣາຊທານທີ່ສຳຄັນ
# ບົດຮຽນທີ  12

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 14:1-25

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 14:1-40

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າຂອງພຣະຣາຊທານໃນການປະກາດມີຄວາມສຳຄັນຫລາຍ ເພາະມັນຊ່ອຍໃຫ້ຄຣິສຕຽນເຕີບໃຫຍ່ ແລະຊ່ອຍໃຫ້ຄົນທັງຫລາຍກັບໃຈ.

<u>ຄຳຖາມເພື່ອການສຳຣວດ</u> ເຮົາຈະຮູ້ຜົນໃນການປະກາດຕໍ່ຄົນທັງຫລາຍໄດ້ແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສົມທຽບຣະຫວ່າງຂອງພຣະຣາຊທານຣະຫວ່າງການເວົ້າພາສາແປກໆ ແລະການປະກາດ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເທົ່ານັ້ນເປັນເຂັມທິດຂອງຊີວິດແລະເປັນວິທີການຕ່າງໆ.
- ແບ່ງປັນຂ່າວປະເສີດແກ່ທຸກໆຄົນໂດຍບໍ່ເລືອກຫນ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນ.

<u>ແຜນສຳລັບການສອນ</u>

1. ເຊີນຜູ້ນຶ່ງທີ່ເວົ້າພາສາອື່ນນອກຈາກພາສາລາວ, ໄທ ແລະອັງກິດ ອ່ານ 1 ໂກຣິນໂທ 14:1-15.

2. ຂໍໃຫ້ຜູ້ນຶ່ງອ່ານພາສາລາວໃນບົດດຽວກັນ ແລະຖາມນັກຮຽນວ່າໃນຣະຫວ່າງສອງພາສານີ້ອັນໃດທ່ານເຂົ້າໃຈ?

3. ແບ່ງນັກຮຽນເປັນສາມກຸ່ມແລະໃຫ້ຫົວຂໍ້ດັ່ງນີ້:

   ➢ ກຸ່ມທີ 1  ອ່ານ 1ໂກຣິນໂທ 14:1-5. ໃຫ້ຊອກຫາດັ່ງນີ້:

      - ໂປໂລສັ່ງໃຫ້ເຮັດຫຍັງ?
      - ຜູ້ປາກພາສາແປກໆກ່າວກັບໃຜ?
      - ມີໃຜແດ່ເຂົ້າໃຈໃນສິ່ງທີ່ລາວກ່າວ?
      - ລາວໄດ້ກ່າວຫຍັງ?
      - ຝ່າຍຜູ້ປະກາດພຣະທັມຊ່ອຍຫຍັງໄດ້ແດ່?
      - ໂປໂລຢາກໃຫ້ເຮັດອັນໃດຫລາຍກວ່າອັນໃດ?
      - ແມ່ນໃຜເປັນໃຫຍ່ໃນການເວົ້າ?

- ກຸ່ມທີ 2 ອ່ານ 1ໂກຣິນໂທ 14:6-14. ໃຫ້ຊອກຫາດັ່ງນີ້:
  - ໂປໂລມາຫາດ້ວຍພາສາແປກໆຈະເປັນແນວໃດ?
  - ກ່າວສະແດງຄວາມຮູ້ທີ່ໂປໂລເວົ້າໝາຍຄວາມວ່າແນວໃດ?
  - ໂປໂລກ່າວເຖິງເຄື່ອງດົນຕຣີເປັນແນວໃດ?
  - ຖ້າເຮົາບໍ່ເຂົ້າໃຈຕໍ່ພາສາທີ່ກ່າວເຮົາເປັນຫຍັງ?
  - ເມື່ອຮ້ອນໃຈຊອກຫາຂອງພຣະຣາຊທານໃຫ້ຊອກອັນໃດຫລາຍກວ່າກັນ?
  - ຜູ້ປາກພາສາແປກໆໄດ້ຄວນເຮັດຫຍັງ?
  - ຖ້າເຮົາໄຫວ້ວອນພາສາແປກໆ ແມ່ນຫຍັງບໍ່ເຂົ້າຮ່ວມ?
- ກຸ່ມທີ 3 ອ່ານ 1ໂກຣິນໂທ 14:15-25. ໃຫ້ຊອກຫາດັ່ງນີ້:
  - ການໄຫວ້ວອນອອກຈາກຈິດວິນຍານແລ້ວຍັງມີຫຍັງອີກແດ່? ເປັນຫຍັງ?
  - ຄົນທັມດາຫລືຜູ້ບໍ່ເຊື່ອເມື່ອຟັງແລ້ວຈະເປັນແນວໃດ?
  - ການໂມທະນາພຣະຄຸນດ້ວຍພາສາແປກໆຊ່ອຍຄົນອື່ນແນວໃດ?
  - ໃຜເວົ້າພາສາແປກໆໄດ້ຫລາຍກວ່າໃຜ? ເປັນຫຍັງເພິ່ນຈຶ່ງບໍ່ເວົ້າ?
  - ການເວົ້າຫ້າຄຳດ້ວຍຈິດໃຈ ແລະການເວົ້າໝື່ນຄຳເປັນພາສາແປກໆແຕກຕ່າງກັນຫຍັງ?
  - ຝ່າຍຄວາມຊົ່ວໃຫ້ເຮົາເປັນແນວໃດ? ແລະຝ່າຍຄວາມນຶກຄິດໃຫ້ເຮົາເປັນແນວໃດ?
  - ເມື່ອຄຣິສຕະຈັກປະຊຸມກັນຕ່າງຄົນຕ່າງກໍເວົ້າພາສາແປກໆຄົນທັມດາມາຟັງເຂົາຈະວ່າແນວໃດ?
  - ຖ້າທຸກຄົນປະກາດພຣະທັມໄດ້ຄົນທີ່ບໍ່ເຊື່ອເຂົ້າມາຟັງຈະເປັນແນວໃດ?

4. ໃຫ້ເວລາຊົ່ວລະຍະນຶ່ງ ແລ້ວໃຫ້ຫົວໜ້າກຸ່ມລາຍງານຕໍ່ກອງປະຊຸມເລີ້ມແຕ່ກຸ່ມທີ່ນຶ່ງເປັນຕົ້ນໄປ.

5. ເມື່ອກຸ່ມທີ່ນຶ່ງລາຍງານຈົບຄຣູຈະສອນຕາມບົດຮຽນຕາມຫົວຂໍ້ 1, 2 ແລະ 3.

6. ຊັກຊວນໃຫ້ນັກຮຽນຊອກສແວງຫາການປະກາດເປັນພາສາມະນຸດເພື່ອສັ່ງສອນຄົນ ສ່ວນພາສາແປກນັ້ນໃຫ້ໃຊ້ເປັນຂອງສ່ວນຕົວຫາກເວົ້າພາສາແປກໆນັ້ນໄດ້. ແລະອ້ອນວອນປິດ.

ອ.ຈ. ທູນພັນ ວົງສຸຣິດທ໌

# ຄຳແນະນຳຄຣູສອນ
# ຄວາມຫວັງອັນສຸດຍອດ
# ບົດຮຽນທີ 13

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 15:1-20, 35-44, 50-57

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 15:1-58

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າການຟື້ນພຣະຊົນຂອງພຣະເຢຊູນັ້ນມີຈິງ, ການຄືນມາຈາກຕາຍຂອງຜູ້ທີ່ເຊື່ອກໍຈະມີໃນວັນສຸດທ້າຍເຫມືອນກັນ.

<u>ຄຳຖາມເພື່ອການສຳຣວດ</u> ເຮົາຫວັງຈະເປັນແນວໃດຫລັງຈາກເຮົາຄືນມາໃນວັນສຸດທ້າຍ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາເຂົ້າໃຈວ່າການຟື້ນພຣະຊົນຂອງພຣະເຢຊູເປັນຫລັກຖານແຫ່ງຄວາມເຊື່ອຂອງພວກເຮົາ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເທົ່າກັບເປັນແຜນທີ່ນຳທາງແຫ່ງຊີວິດ ແລະເປັນຣິດອຳນາດໃນການປະກາດ.
- ແບ່ງປັນຂ່າວປະເສີດແກ່ທຸກໆຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນ.

<u>ແຜນການສອນ</u>

1. ເມື່ອນັກຮຽນມາຮອດແລ້ວແບ່ງນັກຮຽນເປັນ 4 ກຸ່ມ, ໃຫ້ເວລາ 5 ນາທີອ່ານແລະຮັບຜິດຊອບດັ່ງນີ້:
   - ກຸ່ມທີ 1 ໃຫ້ອ່ານ 1ໂກຣິນໂທ 15:1-11.
   - ກຸ່ມທີ 2 ໃຫ້ອ່ານ 1ໂກຣິນໂທ 15: 20-59.
   - ກຸ່ມທີ 3 ໃຫ້ອ່ານ 1ໂກຣິນໂທ 15: 50-58.
   - ກຸ່ມທີ 4 ເປັນກຸ່ມທີ່ບໍ່ເຊື່ອຖ້າຟັງ ແລະຖາມໃນຂະນະແຕ່ລະກຸ່ມລາຍງານ.

2. ຫລັງຈາກແບ່ງກຸ່ມໃຫ້ເຂົາເຈົ້າຊອກຫົວໜ້າເອງແລ້ວຄຣູອ້ອນວອນເປີດແລະອ້ອນວອນເພື່ອຄົນທີ່ບໍ່ເຊື່ອດ້ວຍ.

3. ໃຫ້ກຸ່ມທີ1 ອ່ານ 1ໂກຣິນໂທ 15:1-11 ເມື່ອອ່ານແລ້ວໃຫ້ຜູ້ນຶ່ງເປັນໂປໂລເວົ້າເຣື່ອງນີ້ໃຫ້ກຸ່ມຜູ້ເຊື່ອຟັງ, ໃນນັ້ນກຸ່ມທີ່ບໍ່ເຊື່ອຈະນັ່ງຟັງຢູ່ເຫມືອນກັນ. ດັ່ງນັ້ນຜູ້ທີ່ເວົ້າຕ້ອງພະຍາຍາມເວົ້າໃຫ້ຜູ້ທີ່ບໍ່ເຊື່ອນັ້ນເຂົ້າໃຈ ແຕ່ໃຫ້ຣະວັງການເວົ້າຫຍາບຊ້າ ຫລືສຽດສີຄົນບໍ່ເຊື່ອຢ່າໃຫ້ມີ.

4. ເປີດໂອກາດໃຫ້ກຸ່ມທີ່ບໍ່ເຊື່ອຖາມ ແລະຜູ້ຖາມຄວນມີຄວາມຄິດແບບຄົນບໍ່ເຊື່ອ.

5. ຄຣູສລຸບຕາມບົດຮຽນ <u>ການຟື້ນພຣະຊົນ 15:1-11</u>

6. ເມື່ອຄຣູຈົບແລ້ວໃຫ້ກຸ່ມທີ 2 ແລະກຸ່ມ 3 ເຮັດຢ່າງດຽວກັນກັບກຸ່ມ ທີ 1 , ສ່ວນຄຣູຈະຕ້ອງສລຸບຫລັງຈາກແຕ່ລະກຸ່ມລາຍງານ.

7. ອາດຈະມີຄົນບໍ່ເຊື່ອມາຮ່ວມຮຽນໃນວັນນີ້ ດັ່ງນັ້ນຄຣູຄວນເປີດໂອກາດໃຫ້ເພິ່ນຮັບເຊື່ອໃນວັນນີ້.

8. ຄຣູຂອບໃຈແຕ່ລະກຸ່ມ ແລະອ້ອນວອນຂໍພຣະພອນແລະຂອບຄຸນທີ່ໃຫ້ເຮົາມີຄວາມຫວັງອັນສຸດຍອດນີ້.